ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 23 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 11 ພຶດສະພາ 2017

# ກົດໝາຍ
# ວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ
# ( ສະບັບປັບປຸງ )
# ພາກທີ I
# ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ບໍລິຫານ, ປົກປັກຮັກສາ, ພັດທະນາ, ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ, ການປ້ອງກັນຜົນເສຍຫາຍຈາກນ້ຳ, ການບູລະນະຟື້ນຟູເຂດທີ່ໄດ້ຮັບຜົນກະທົບ ເພື່ອຮັບປະກັນຄຸນນະພາບ, ປະລິມານນ້ຳ ແລະ ຊັບພະຍາກອນນ້ຳໃຫ້ຍືນຍົງ ແນໃສ່ຕອບສະໜອງຄວາມຕ້ອງການໃນການດຳລົງຊີວິດຂອງປະຊາຊົນ, ການຜະລິດກະສິກຳ, ອຸດສາຫະກຳ ແລະ ການບໍລິການ, ຮັບປະກັນການປົກປັກຮັກສາສິ່ງແວດລ້ອມສັງຄົມ, ທຳມະຊາດ, ພັດທະນາຕາມທິດສີຂຽວ, ຍືນຍົງ ແລະ ຄວາມໝັ້ນຄົງຂອງຊາດ, ເຊື່ອມໂຍງກັບພາກພື້ນ, ສາກົນ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາເສດຖະກິດ-ສັງຄົມ.

**ມາດຕາ 2 (ປັບປຸງ) ນ້ຳ ແລະ ຊັບພະຍາກອນນ້ຳ**

ນ້ຳ ແມ່ນ ຊັບພະຍາກອນທຳມະຊາດ ຊະນິດໜຶ່ງທີ່ເປັນທາດແຫຼວ ຊຶ່ງແມ່ນຊັບພະຍາກອນຕົ້ນຕໍ ແລະ ເປັນພື້ນຖານກວ່າໝູ່ໃນຊັບພະຍາກອນນ້ຳ.

ຊັບພະຍາກອນນ້ຳ ແມ່ນ ຊັບພະຍາກອນທຳມະຊາດ ຊຶ່ງປະກອບດ້ວຍ ນ້ຳ, ແຫຼ່ງນ້ຳ ແລະ ສິ່ງທີ່ມີຊີວິດ ຫຼື ບໍ່ມີຊີວິດ ຢູ່ໃນແຫຼ່ງນ້ຳ ເຊັ່ນ ພືດ, ສັດນ້ຳ, ຫີນ, ຫີນແຮ່, ຊາຍ, ຕົມ, ແຮ່ທາດ.

**ມາດຕາ 3 (ໃໝ່) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ແຫຼ່ງນ້ຳ** ໝາຍເຖິງ ສະຖານທີ່ບ່ອນມີການເຕົ້າໂຮມ, ອາໄສ, ພັກຕົວ ຫຼື ເຄື່ອນໄຫວແບບຖາວອນ ຫຼື ຊົ່ວຄາວຂອງນ້ຳ; ແຫຼ່ງນ້ຳເກີດຂຶ້ນຈາກທຳມະຊາດ ຫຼື ມະນຸດສ້າງຂຶ້ນ ຊຶ່ງມີຢູ່ເທິງໜ້າດິນ, ໃຕ້ດິນ ແລະ ໃນອາກາດ;

2. **ແຫຼ່ງນ້ຳໜ້າດິນ** ໝາຍເຖິງ ນ້ຳ ທີ່ຢູ່ເທິງໜ້າດິນ ເປັນຕົ້ນ ແມ່ນ້ຳ, ລຳເຊ, ຫ້ວຍ, ຮ່ອງ, ໜອງ, ຄອງ, ບຶງ, ທາມ, ເບືອມ, ກຸດ, ນ້ຳຕົກຕາດ, ອ່າງເກັບນ້ຳ, ນ້ຳລອດຖ້ຳ, ນ້ຳຍ້ອຍຜາ;

3. **ແຫຼ່ງນ້ຳໃຕ້ດິນ** ໝາຍເຖິງ ນ້ຳທີ່ຢູ່ພື້ນດິນ ເປັນຊັ້ນ, ເປັນຜົ້ງ, ເປັນສາຍ ຫຼື ປົນກັນກັບເນື້ອດິນ ເປັນຕົ້ນ ນ້ຳສ້າງ, ນ້ຳອອກບໍ່, ນ້ຳແຮ່ທາດ, ນ້ຳບາດານ, ນ້ຳລອດພື້ນ;

4. **ແຫຼ່ງນ້ຳໃນອາກາດ** ໝາຍເຖິງ ນ້ຳຝົນ, ໝາກເຫັບ, ນ້ຳໝອກ, ນ້ຳຄ້າງ;

5. **ອ່າງເກັບນ້ຳ** ໝາຍເຖິງ ລະບົບເກັບກັກນ້ຳ ດ້ວຍການຂຸດສະ, ການຕັນນ້ຳຫ້ວຍ, ນ້ຳເຊ ເພື່ອໃຫ້ມີນ້ຳພຽງພໍ ແລະ ແຮໄວ້ ແນໃສ່ຮັບປະກັນຄວາມຕ້ອງການດ້ານການດຳລົງຊີວິດ, ການຜະລິດກະສິກຳ, ການຄົງຕົວຂອງສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ແລະ ອື່ນໆ;

6. **ເຂື່ອນ, ຝາຍ** ໝາຍເຖິງ ສິ່ງກໍ່ສ້າງດ້ວຍການຕັນສາຍນ້ຳ, ກັກເກັບນ້ຳໄວ້ ເພື່ອຜະລິດໄຟຟ້ານ້ຳຕົກ ຫຼື ສ້າງຊົນລະປະທານ ຫຼື ເພື່ອຈຸດປະສົງອື່ນ;

7. **ນ້ຳເປື້ອນ** ໝາຍເຖິງ ນ້ຳທີ່ມີສິ່ງປົນເປື້ອນເກີນຄ່າມາດຕະຖານ ຫຼື ນ້ຳທີ່ຜ່ານການນຳໃຊ້ແລ້ວ ຊຶ່ງພາໃຫ້ນ້ຳປ່ຽນຄຸນນະພາບ ເຊັ່ນ ນຳໃຊ້ໃນ ຄົວເຮືອນ, ກະສິກຳ, ອຸດສາຫະກຳ ແລະ ກິດຈະການອື່ນ;

8. **ການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ** ໝາຍເຖິງ ຂະບວນການສົ່ງເສີມການຄຸ້ມຄອງ ແລະ ການພັດທະນານ້ຳ ແລະ ຊັບພະຍາກອນນ້ຳ, ທີ່ດິນ, ປ່າໄມ້ ແລະ ຊັບພະຍາກອນອື່ນ ໃຫ້ດຳເນີນໄປຢ່າງມີຄວາມກົມກຽວ, ສົມສ່ວນ ແລະ ປະສານກັນຢ່າງສະໜິດແໜ້ນ ເພື່ອຮັບປະກັນໃຫ້ຂະບວນການຄຸ້ມຄອງ ແລະ ພັດທະນາຊັບພະຍາກອນດັ່ງກ່າວ ໃຫ້ຜົນຕອບແທນສູງສຸດທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;

9. **ການປ້ອງກັນ ແລະ ຕ້ານການເຊາະເຈື່ອນ** ໝາຍເຖິງ ການປ້ອງກັນ ແລະ ສະກັດກັ້ນບໍ່ໃຫ້ມີການເຊາະເຈື່ອນ ຢູ່ໃນເຂດອ່າງຮັບນ້ຳ, ອ່າງເກັບນ້ຳ ແລະ ບໍລິເວນແຄມນ້ຳ;

10. **ວັງສະຫງວນ** ໝາຍເຖິງ ເຂດນ້ຳ ເປັນຕົ້ນ ບ່ອນນ້ຳເລິກໃນພື້ນທີ່ແຫຼ່ງນ້ຳ ຫຼື ຕາມລຳແມ່ນ້ຳໃດໜຶ່ງ ທີ່ໄດ້ກຳນົດໃຫ້ເປັນເຂດຫວງຫ້າມ ຕະຫຼອດລະດູການ ເພື່ອເປັນບ່ອນທີ່ຢູ່ອາໄສ ແລະ ແຜ່ພັນຢ່າງປອດໄພຂອງຊັບພະຍາກອນສັດນ້ຳ;

11. **ຄົວເຮືອນ** ໝາຍເຖິງ ເຮືອນ ທີ່ມີບຸກຄົນ ຫຼື ກຸ່ມຄົນ ທີ່ມີການກິນຢູ່ຮ່ວມກັນ ແລະ ດຳເນີນກິດຈະກຳປະຈຳວັນຮ່ວມກັນເປັນປະຈຳ; ຄົວເຮືອນໜຶ່ງປະກອບມີ ໜຶ່ງ ຫຼື ຫຼາຍຄອບຄົວ ທີ່ມີໜຶ່ງ ຫຼື ຫຼາຍສຳມະໂນຄົວ;

12. **ລະບົບນິເວດ** ໝາຍເຖິງ ສາຍກ່ຽວພັນຊຶ່ງກັນ ແລະ ກັນ ທັງທາງບວກ ແລະ ທາງລົບລະຫວ່າງ ສິ່ງທີ່ມີຊີວິດ ແລະ ສິ່ງບໍ່ມີຊີວິດ ທີ່ຄົງຕົວຢູ່ຕາມທຳມະຊາດ;

13. **ອ່າງບຳບັດນ້ຳເປື້ອນ** ໝາຍເຖິງ ອ່າງທີ່ກຳຈັດ ຫຼື ທຳລາຍສິ່ງປົນເປື້ອນ ໃນນ້ຳເປື້ອນໃຫ້ໝົດໄປ ຫຼື ເຫຼືອນ້ອຍທີ່ສຸດ ຕາມມາດຕະຖານທີ່ກຳນົດ ແລະ ບໍ່ເກີດມົນລະພິດຕໍ່ສິ່ງແວດລ້ອມ.

**ມາດຕາ 4 ກຳມະສິດກ່ຽວກັບ ນ້ຳ ແລະ ຊັບພະຍາກອນນ້ຳ**

ນ້ຳ ແລະ ຊັບພະຍາກອນນ້ຳ ທີ່ຢູ່ໃນພື້ນແຜ່ນດິນຂອງ ສປປ ລາວ ແມ່ນ ກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຕົວແທນໃນການຄຸ້ມຄອງ ແລະ ກຳນົດການແບ່ງປັນໃຫ້ພາກສ່ວນຕ່າງໆ ຊົມໃຊ້ຢ່າງທົ່ວເຖິງ ແລະ ສົມເຫດສົມຜົນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈະມີສິດຄອບຄອງ ຫຼື ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ເຂົ້າໃນກິດຈະການໃດໜຶ່ງໄດ້ ກໍຕໍ່ເມື່ອຫາກໄດ້ຮັບອະນຸຍາດຈາກອົງການລັດທີ່ກ່ຽວຂ້ອງ ຍົກເວັ້ນການນຳໃຊ້ຂະໜາດນ້ອຍ.

**ມາດຕາ 5 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ**

ລັດ ຊຸກຍູ້ ແລະ ສົ່ງເສີມ ໃຫ້ມີການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ທີ່ສະອາດ, ປອດໄພ, ປະຢັດ, ມີປະສິດທິພາບ ໃຫ້ເກີດຜົນປະໂຫຍດສູງສຸດ, ຮັບປະກັນໃຫ້ແກ່ການປົກປັກຮັກສານ້ຳ, ຊັບພະຍາກອນນ້ຳ ແລະ ລະບົບນິເວດ ຕາມທິດສີຂຽວ ແລະ ຍືນຍົງ ດ້ວຍການສ້າງຈິດສຳນຶກ, ສຶກສາອົບຮົມໃຫ້ທຸກຄົນ ເຫັນໄດ້ຄຸນປະໂຫຍດ, ຄວາມສຳຄັນຂອງນ້ຳ ແລະ ຊັບພະຍາກອນນ້ຳ.

ລັດ ຊຸກຍູ້, ສົ່ງເສີມ ໃຫ້ມີການພັດທະນາຊັບພະຍາກອນມະນຸດ, ກໍ່ສ້າງພື້ນຖານໂຄງລ່າງ, ການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ທີ່ເປັນມິດກັບສິ່ງແວດລ້ອມ ແລະ ພັດທະນາພູມປັນຍາທ້ອງຖິ່ນເຂົ້າໃນການຄຸ້ມຄອງ, ບໍລິຫານ, ປົກປັກຮັກສາ, ນຳໃຊ້, ພັດທະນາ ແລະ ບູລະນະຟື້ນຟູນ້ຳ ແລະ ຊັບພະຍາກອນນ້ຳ ຢ່າງມີປະສິດທິຜົນ.

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການປົກປັກຮັກສາ, ພັດທະນາ, ບູລະນະຟື້ນຟູນ້ຳ ແລະ ຊັບພະຍາກອນນ້ຳ ຕາມທ່າແຮງທີ່ມີຢູ່ ເພື່ອສະໜອງນ້ຳໃຫ້ແກ່ພົນລະເມືອງ ລວມທັງເຂດຫ່າງໄກສອກຫຼີກ, ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 6 (ປັບປຸງ) ຫຼັກການຄຸ້ມຄອງ ນ້ຳ ແລະ ຊັບພະຍາກອນນ້ຳ**

ການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນການຄຸ້ມຄອງ, ການນຳໃຊ້, ການອະນຸລັກ ແລະ ປົກປັກຮັກສານ້ຳ, ຊັບພະຍາກອນນ້ຳ, ສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ;

2. ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຍຸດທະສາດການຄຸ້ມຄອງ, ການບໍລິການ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ, ແຜນການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ, ການປະເມີນສິ່ງແວດລ້ອມແບບຍຸດທະສາດ, ການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;

3. ເອົາການປ້ອງກັນນ້ຳ ແລະ ຊັບພະຍາກອນນ້ຳ ເປັນຕົ້ນຕໍ ແລະ ເອົາການບູລະນະຟື້ນຟູນ້ຳ ແລະ ຊັບພະຍາກອນນ້ຳ ເປັນສຳຄັນ;

4. ຮັບປະກັນການມີສ່ວນຮ່ວມຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງໃນການວາງແຜນການ, ການພັດທະນາ, ການນຳໃຊ້ ແລະ ການປົກປັກຮັກສານ້ຳ ແລະ ຊັບພະຍາກອນນ້ຳໃຫ້ຍືນຍົງ;

5. ຮັບຜິດຊອບຕໍ່ຄວາມເສຍຫາຍ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ ທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 7 (ປັບປຸງ) ພັນທະໃນການຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ ນ້ຳ ແລະ ຊັບພະຍາກອນນ້ຳ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພັນທະໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້, ບູລະນະຟື້ນຟູນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອຮັບປະກັນຄວາມຍືນຍົງທາງດ້ານປະລິມານ ແລະ ຄຸນນະພາບຂອງນ້ຳ ແລະ ຊັບພະຍາກອນນ້ຳ.

**ມາດຕາ 8 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວ ຢູ່ ສປປ ລາວ.

**ມາດຕາ 9 (ໃໝ່) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ ແລະ ບູລະນະຟື້ນຟູ ນ້ຳ ແລະ ຊັບພະຍາກອນນ້ຳ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ ແລະ ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ແຜນຍຸດທະສາດ ການຄຸ້ມຄອງ, ການບໍລິຫານ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ

### ມາດຕາ 10 (ໃໝ່) ແຜນຍຸດທະສາດ ການຄຸ້ມຄອງ, ການບໍລິຫານ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ

ແຜນຍຸດທະສາດ ການຄຸ້ມຄອງ, ການບໍລິຫານ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນ ນະໂຍບາຍພື້ນຖານ ກ່ຽວກັບວຽກງານ ຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ ແລະ ພັດທະນາຊັບພະຍາກອນນ້ຳ.

ແຜນຍຸດທະສາດ ການຄຸ້ມຄອງ, ການບໍລິຫານ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ປະກອບມີ ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ກ່ຽວກັບຊັບພະຍາກອນນ້ຳ.

### ມາດຕາ 11 (ໃໝ່) ແຜນຍຸດທະສາດ ການຄຸ້ມຄອງ, ການບໍລິຫານ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳລະດັບຊາດ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ສ້າງ ແລະ ທົບທວນແຜນຍຸດທະສາດ ກ່ຽວກັບການຄຸ້ມຄອງ, ການບໍລິຫານ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳລະດັບຊາດ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ ໂດຍປະສານສົມທົບປຶກສາຫາລືກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ ແລ້ວສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາຮັບຮອງ.

### ມາດຕາ 12 (ໃໝ່) ແຜນຍຸດທະສາດ ການຄຸ້ມຄອງ, ການບໍລິຫານ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາ ກອນນ້ຳລະດັບທ້ອງຖິ່ນ

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ສ້າງ ແລະ ທົບທວນແຜນຍຸດທະສາດ ກ່ຽວກັບການຄຸ້ມຄອງ, ການບໍລິຫານ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳລະດັບທ້ອງຖິ່ນ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງ ແຂວງ, ນະຄອນຫຼວງ ແລະ ແຜນຍຸດທະສາດການຄຸ້ມຄອງ, ການບໍລິຫານ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳລະດັບຊາດ ໃນແຕ່ລະໄລຍະ ໂດຍປະສານສົມທົບປຶກສາຫາລື ກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງຢູ່ຂັ້ນທ້ອງຖິ່ນ ເພື່ອສະເໜີຕໍ່ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ ແລ້ວສະເໜີຕໍ່ສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງ.

## ພາກທີ III

## ການສຳຫຼວດ, ການຂຶ້ນບັນຊີ, ອ່າງຮັບນ້ຳ ແລະ ອ່າງເກັບນ້ຳ

### ໝວດທີ 1

### ການສຳຫຼວດ ແລະ ການຂຶ້ນບັນຊີ ນ້ຳ ແລະ ຊັບພະຍາກອນນ້ຳ

**ມາດຕາ 13 (ປັບປຸງ) ການສຳຫຼວດ ແລະ ການຂຶ້ນບັນຊີ**

ການສຳຫຼວດ ນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນ ການເກັບກຳຂໍ້ມູນກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ ດ້ວຍການວັດແທກ, ການເຈາະສຳຫຼວດ, ການວິໄຈລັກສະນະທາງດ້ານກາຍະພາບ ແລະ ເຄມີ ຂອງນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອຈັດສັນ ແລະ ນຳໃຊ້ ໃນການວາງແຜນຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ.

ການຂຶ້ນບັນຊີ ນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນ ການສັງລວມ, ຈັດໝວດ ແລະ ໃສ່ລະຫັດຂໍ້ມູນ ນ້ຳ ແລະ ຊັບພະຍາກອນນ້ຳ ແລ້ວນຳເຂົ້າໃນຖານຂໍ້ມູນຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອເປັນເຄື່ອງມືໃນການຕິດຕາມ, ກວດກາ, ປະເມີນສະພາບ, ວິເຄາະບັນຫາ, ສະໜັບສະໜູນໃນການຕັດສິນໃຈ, ການຄຸ້ມຄອງ, ການວາງແຜນ ແລະ ການພັດທະນານ້ຳ ແລະ ຊັບພະຍາກອນນ້ຳ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບຜິດຊອບວຽກງານສຳຫຼວດນ້ຳ ແລະ ຊັບພະຍາກອນນ້ຳ ເປັນຕົ້ນ ແຫຼ່ງນ້ຳສາກົນ, ແຫຼ່ງນ້ຳທີ່ຜ່ານລະຫວ່າງແຂວງ, ເຂດປ່າຍອດນ້ຳ, ທີ່ດິນບໍລິເວນນ້ຳ ແລະ ອ່າງຮັບນ້ຳທົ່ວປະເທດ; ຂຶ້ນບັນຊີນ້ຳ ແລະ ຊັບພະຍາກອນນ້ຳ ທີ່ໄດ້ສຳຫຼວດ ແລະ ໄດ້ຈາກຂະແໜງການອື່ນ; ຂຶ້ນທະບຽນຂໍ້ມູນກ່ຽວກັບການນຳໃຊ້ນ້ຳ ຂອງບັນດາຂະແໜງການ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ສຳລັບການສຳຫຼວດ ເພື່ອການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳຂອງແຕ່ລະຂະແໜງການນັ້ນ ໃຫ້ຂະແໜງການທີ່ກ່ຽວຂ້ອງຮັບຜິດຊອບສຳຫຼວດ ແລະ ຂຶ້ນບັນຊີການນຳໃຊ້ ແລ້ວສະໜອງຂໍ້ມູນໃຫ້ແກ່ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອສັງລວມເຂົ້າຖານຂໍ້ມູນນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ.

**ມາດຕາ 14 (ໃໝ່) ລະບົບຂໍ້ມູນ ຂ່າວສານນ້ຳ ແລະ ຊັບພະຍາກອນນ້ຳ**

ລະບົບຂໍ້ມູນ ຂ່າວສານນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນ ເຄື່ອງມືພື້ນຖານທີ່ຈຳເປັນໃຫ້ແກ່ການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອຮັບປະກັນຄຸນນະພາບ, ຄວາມສະດວກ, ທັນການ, ວ່ອງໄວ ແລະ ຊັດເຈນ ໃນການນຳໃຊ້ຂໍ້ມູນ ຂ່າວສານ ເຂົ້າໃນການວາງແຜນຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳໃຫ້ມີປະສິດທິຜົນ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຜິດຊອບເກັບກຳ, ລວບລວມ, ສ້າງລະບົບຂໍ້ມູນ ຂ່າວສານ, ນຳໃຊ້ ແລະ ສະໜອງຂໍ້ມູນ ຂ່າວສານນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ໃຫ້ເຊື່ອມຕໍ່ກັບລະບົບຂໍ້ມູນຂອງສູນສະຖິຕິແຫ່ງຊາດ ໂດຍປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ ຮັບຜິດຊອບສ້າງຖານຂໍ້ມູນ ຂ່າວສານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍມີການເຊື່ອມຕໍ່ກັບລະບົບຂໍ້ມູນ ຂ່າວສານນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ແລະ ມີການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນທ້ອງຖິ່ນ.

ຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ກະສິກຳ ແລະ ປ່າໄມ້, ພະລັງງານ ແລະ ບໍ່ແຮ່, ໂຍທາທິການ ແລະ ຂົນສົ່ງ, ອຸດສາຫະກຳ ແລະ ການຄ້າ, ສາທາລະນະສຸກ, ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ສຶກສາທິການ ແລະ ກິລາ ສະໜອງຂໍ້ມູນ ກ່ຽວກັບການນຳໃຊ້ນ້ຳໃນຂົງເຂດຕົນ ໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງປັບປຸງ, ຄຸ້ມຄອງ ແລະ ນຳໃຊ້ຖານຂໍ້ມູນ ຂ່າວສານ ກ່ຽວກັບການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ຂອງຂະແໜງການຕົນ ໂດຍມີການເຊື່ອມຕໍ່ກັບລະບົບຂໍ້ມູນ ຂ່າວສານນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ແລະ ໂດຍມີການປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ການຄຸ້ມຄອງລະບົບຂໍ້ມູນ ຂ່າວສານນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 15 (ໃໝ່) ການເຂົ້າເຖິງ ແລະ ການນຳໃຊ້ຂໍ້ມູນ ຂ່າວສານ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນ ຂ່າວສານກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ ໃນລະບົບຂໍ້ມູນ ຂ່າວສານນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ.

ສຳລັບຂໍ້ມູນ ກ່ຽວກັບການຄົ້ນຄວ້າ ແລະ ການສຳຫຼວດນ້ຳ ແລະ ຊັບພະຍາກອນນ້ຳ ທີ່ນຳໃຊ້ເຂົ້າໃນເປົ້າໝາຍທຸລະກິດ ໃຫ້ເສຍຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ.

## ໝວດທີ 2
## ອ່າງຮັບນ້ຳ

### ມາດຕາ 16 (ປັບປຸງ) ອ່າງຮັບນ້ຳ

ອ່າງຮັບນ້ຳ ແມ່ນ ຂອບເຂດເນື້ອທີ່ດິນ, ເນື້ອທີ່ນ້ຳ ແລະ ເນື້ອທີ່ປ່າໄມ້ທຸກຕອນ ຕັ້ງແຕ່ຍອດນ້ຳ ຈົນຮອດປາກນ້ຳ ບ່ອນທີ່ມີສັນປັນນ້ຳ ແລະ ເວລາທີ່ຝົນຕົກລົງມາໄຫຼໂຮມກັນເຂົ້າເປັນລະບົບແຫຼ່ງນ້ຳ ເຊັ່ນ ນ້ຳຂອງ, ນ້ຳອູ, ນ້ຳງື່ມ, ນ້ຳເທີນ-ນ້ຳກະດິງ, ເຊບັ້ງໄຟ, ເຊກອງ.

ອ່າງຮັບນ້ຳ ທີ່ຢູ່ໃນດິນແດນ ຂອງ ສປປ ລາວ ມີ ສາມ ຂະໜາດ ດັ່ງນີ້:

1. ອ່າງຮັບນ້ຳ ຂະໜາດໃຫຍ່ ແມ່ນ ອ່າງແມ່ນ້ຳຂອງ, ແມ່ນ້ຳອື່ນ ທີ່ເປັນສາຂາແມ່ນ້ຳຂອງ ຫຼື ສາຂາແມ່ນ້ຳອື່ນ ຊຶ່ງມີເນື້ອທີ່ຫຼາຍກວ່າ ສີ່ພັນ ກິໂລຕາແມັດ;

2. ອ່າງຮັບນ້ຳ ຂະໜາດກາງ ແມ່ນ ອ່າງແມ່ນ້ຳທີ່ເປັນສາຂາແມ່ນ້ຳຂອງ ຫຼື ສາຂາແມ່ນ້ຳອື່ນ ຊຶ່ງມີ ເນື້ອທີ່ແຕ່ ໜຶ່ງພັນ ຫາ ສີ່ພັນ ກິໂລຕາແມັດ;

3. ອ່າງຮັບນ້ຳ ຂະໜາດນ້ອຍ ແມ່ນ ອ່າງແມ່ນ້ຳສາຂາແມ່ນ້ຳຂອງ ຫຼື ສາຂາແມ່ນ້ຳອື່ນ ຊຶ່ງມີ ເນື້ອທີ່ ໜ້ອຍກວ່າ ໜຶ່ງພັນ ກິໂລຕາແມັດ.

### ມາດຕາ 17 ການຈັດສັນອ່າງຮັບນ້ຳ

ໃນການຈັດສັນອ່າງຮັບນ້ຳ ເພື່ອກຳນົດການແບ່ງປັນ, ການຄຸ້ມຄອງ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ຢ່າງຖືກຕາມເປົ້າໝາຍ ແລະ ມີປະສິດທິຜົນນັ້ນ ໃຫ້ອີງຕາມການສຳຫຼວດ ແລະ ຂໍ້ມູນທີ່ເກັບກຳໄດ້.

### ມາດຕາ 18 (ໃໝ່) ການຄຸ້ມຄອງອ່າງຮັບນ້ຳ

ການຄຸ້ມຄອງອ່າງຮັບນ້ຳ ໃຫ້ປະຕິບັດຕາມການຄຸ້ມຄອງຊັບພະຍາກອນນ້ຳ ແບບເຊື່ອມສານ ໂດຍອີງໃສ່ສະພາບຂອງແຕ່ລະອ່າງຮັບນ້ຳ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບຜິດຊອບຄຸ້ມຄອງອ່າງຮັບນ້ຳ ຂະໜາດໃຫຍ່ ແລະ ອ່າງຮັບນ້ຳທີ່ໄຫຼຜ່ານສອງປະເທດ ຫຼື ສອງແຂວງຂຶ້ນໄປ.

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ຮັບຜິດຊອບຄຸ້ມຄອງອ່າງຮັບນ້ຳ ຂະໜາດກາງ ທີ່ຢູ່ໃນຂອບເຂດຂອງແຂວງ, ນະຄອນຫຼວງຕົນ.

ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ຮັບຜິດຊອບຄຸ້ມຄອງອ່າງຮັບນ້ຳ ຂະໜາດນ້ອຍ ທີ່ຢູ່ໃນຂອບເຂດຂອງເມືອງ, ເທດສະບານ, ນະຄອນຕົນ.

ອົງການປົກຄອງທ້ອງຖິ່ນທຸກຂັ້ນ ມີໜ້າທີ່ປົກປັກຮັກສາອ່າງຮັບນໍ້າທຸກຂະໜາດ ທີ່ຢູ່ໃນຂອບເຂດແດນຂອງຕົນ.

ການແບ່ງຂັ້ນຄຸ້ມຄອງອ່າງຮັບນໍ້າ ລະອຽດໄດ້ກໍານົດໄວ້ໃນບັນຊີ ທີ່ຂຶ້ນໂດຍກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 19 (ໃໝ່) ແຜນການຄຸ້ມຄອງອ່າງຮັບນໍ້າ**

ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງແຜນການຄຸ້ມຄອງອ່າງຮັບນໍ້າ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໃນທຸກໆ ຫ້າປີ ແລ້ວສະເໜີລັດຖະບານ ພິຈາລະນາຮັບຮອງ.

ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ ເປັນເຈົ້າການປະສານສົມທົບກັບພະແນກການ ແລະ ອົງການປົກຄອງທ້ອງຖິ່ນຂັ້ນເມືອງທີ່ກ່ຽວຂ້ອງ ສ້າງແຜນການຄຸ້ມຄອງອ່າງຮັບນໍ້າ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໃນທຸກໆ ຫ້າປີ ແລ້ວສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາຮັບຮອງ.

ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ເປັນເຈົ້າການປະສານສົມທົບກັບຫ້ອງການ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ ສ້າງແຜນການຄຸ້ມຄອງອ່າງຮັບນໍ້າ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໃນທຸກໆ ຫ້າປີ ແລ້ວສະເໜີເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາຮັບຮອງ.

ແຜນການຄຸ້ມຄອງອ່າງຮັບນໍ້າ ຕ້ອງສອດຄ່ອງກັບວິໄສທັດ, ແຜນຍຸດທະສາດ ການຄຸ້ມຄອງ, ການບໍລິຫານ ແລະ ການນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າລະດັບຊາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຫຼື ຂັ້ນທ້ອງຖິ່ນ ໂດຍອີງໃສ່ເງື່ອນໄຂ, ຈຸດພິເສດ ແລະ ທີ່ຕັ້ງພູມສັນຖານ ຂອງແຕ່ລະອ່າງຮັບນໍ້າໃນແຕ່ລະທ້ອງຖິ່ນ.

**ມາດຕາ 20 (ໃໝ່) ການປະສານງານ ໃນການນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າ ກ່ຽວກັບອ່າງຮັບນໍ້າ**

ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ກໍານົດກົນໄກການປະສານງານ ແລະ ມາດຕະການໃນການຄຸ້ມຄອງ, ນໍາໃຊ້, ການກັກເກັບນໍ້າ, ການປ່ອຍນໍ້າ, ການແກ້ໄຂບັນຫາ, ການສະໜອງຂໍ້ມູນກ່ຽວກັບອ່າງຮັບນໍ້ານັ້ນ ໂດຍສອດຄ່ອງກັບແຜນການຄຸ້ມຄອງອ່າງຮັບນໍ້າ, ການປະເມີນສິ່ງແວດລ້ອມແບບຍຸດທະສາດ ແລະ ລະບຽບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທໍາມະຊາດ.

**ມາດຕາ 21 (ໃໝ່) ການກຳນົດປະລິມານນ້ຳໄຫຼຕ່ຳສຸດ**

ການກຳນົດປະລິມານນ້ຳໄຫຼຕ່ຳສຸດ ແມ່ນ ການກຳນົດປະລິມານນ້ຳໄຫຼ ທີ່ຕ້ອງຮັກສາໄວ້ໃນສາຍນ້ຳ ຫຼື ອ່າງຮັບນ້ຳ ໃນເຂດທີ່ມີການພັດທະນາ ແລະ ນຳໃຊ້ນ້ຳ ເພື່ອຮັບປະກັນຄວາມຕ້ອງການພື້ນຖານໃນການດຳລົງຊີວິດຂອງປະຊາຊົນ ແລະ ຄວາມຍືນຍົງຂອງລະບົບນິເວດໃນອ່າງຮັບນ້ຳ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກຳນົດປະລິມານນ້ຳໄຫຼຕ່ຳສຸດໃນແຕ່ລະໄລຍະ ຕາມຄວາມຮຽກຮ້ອງຕ້ອງການ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

## ໝວດທີ 3
## ອ່າງເກັບນ້ຳ

**ມາດຕາ 22 (ໃໝ່) ປະເພດອ່າງເກັບນ້ຳ**

ອ່າງເກັບນ້ຳ ມີ ສອງ ປະເພດ ດັ່ງນີ້:

1. ອ່າງເກັບນ້ຳທຳມະຊາດ;
2. ອ່າງເກັບນ້ຳທີ່ມະນຸດສ້າງຂຶ້ນ.

ອ່າງເກັບນ້ຳທຳມະຊາດ ແມ່ນ ໜອງ, ບຶງ, ທາມ, ກຸດ, ຊຳ, ເບືອມ ແລະ ພື້ນທີ່ອື່ນ ທີ່ເກີດຂຶ້ນຕາມທຳມະຊາດ ຊຶ່ງບໍລິມາດນ້ຳມີຄວາມແຕກຕ່າງໃນລະດູແລ້ງ ແລະ ລະດູຝົນ.

ອ່າງເກັບນ້ຳທີ່ມະນຸດສ້າງຂຶ້ນ ແມ່ນ ພື້ນທີ່ ທີ່ສ້າງຂຶ້ນດ້ວຍການຂຸດສະ, ການຕັນສາຍນ້ຳ ຫຼື ວິທີການອື່ນ ເພື່ອກັກເກັບນ້ຳສຳລັບຈຸດປະສົງສະເພາະໃດໜຶ່ງ ເຊັ່ນ ພະລັງງານໄຟຟ້າ, ບໍ່ແຮ່, ອຸດສາຫະກຳ, ກະສິກຳ, ຊົນລະປະທານ, ການປະມົງ, ການນຳໃຊ້ໃນຄົວເຮືອນ, ການທ່ອງທ່ຽວ, ລະບົບນິເວດ.

**ມາດຕາ 23 (ໃໝ່) ການຄຸ້ມຄອງອ່າງເກັບນ້ຳ**

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮ່ວມກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄຸ້ມຄອງອ່າງເກັບນ້ຳທຳມະຊາດ ດ້ວຍການສຳຫຼວດ, ຂຶ້ນບັນຊີ ແລະ ວາງມາດຕະການໃນການຄຸ້ມຄອງອ່າງເກັບນ້ຳດັ່ງກ່າວ ໃຫ້ມີຄວາມອຸດົມສົມບູນ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ອອກລະບຽບການລວມ ກ່ຽວກັບການຄຸ້ມຄອງອ່າງເກັບນ້ຳທຳມະຊາດ ແລະ ອ່າງເກັບນ້ຳທີ່ມະນຸດສ້າງຂຶ້ນ ໂດຍປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອ່າງເກັບນ້ຳ ທີ່ຂະແໜງການໃດສ້າງຂຶ້ນ ເປັນຕົ້ນ ຂະແໜງການພະລັງງານ ແລະ ບໍ່ແຮ່, ຂະແໜງການກະສິກຳ ແລະ ປ່າໄມ້ ໃຫ້ຂະແໜງການນັ້ນເປັນຜູ້ຄຸ້ມຄອງ, ອອກລະບຽບການສະເພາະ ແລະ ສ້າງ

ກົນໄກປະສານງານ ໂດຍປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ໃຫ້ສອດຄ່ອງກັບແຜນການຄຸ້ມຄອງອ່າງຮັບນໍ້າ ແລະ ກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 24 (ໃໝ່) ພັນທະຂອງຜູ້ພັດທະນາໂຄງການ ຫຼື ຜູ້ປະກອບການ**

ຜູ້ພັດທະນາໂຄງການ ແມ່ນ ຜູ້ທີ່ໄດ້ຮັບອະນຸຍາດໃຫ້ສຶກສາ, ສຳຫຼວດ, ອອກແບບ, ກໍ່ສ້າງ ແລະ ດຳເນີນໂຄງການ.

ຜູ້ປະກອບການ ແມ່ນ ຜູ້ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການໃດໜຶ່ງ ໃນການນຳໃຊ້ນໍ້າ ເພື່ອເປົ້າໝາຍທາງທຸລະກິດ ເປັນຕົ້ນ ການລ້ຽງສັດນໍ້າ, ທ່ອງທ່ຽວ, ໂຮງງານນໍ້າປະປາ.

ຜູ້ພັດທະນາໂຄງການ ຕ້ອງສ້າງແຜນການຄຸ້ມຄອງອ່າງເກັບນໍ້າ ທີ່ຢູ່ໃນຂອບເຂດການພັດທະນາຂອງຕົນ ດ້ວຍການວາງມາດຕະການຄວາມປອດໄພ ຂອງອ່າງເກັບນໍ້າ, ປ້ອງກັນການເຊາະເຈື່ອນ, ໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ, ແຜນການປູກ ແລະ ຟື້ນຟູປ່າປ້ອງກັນແຫຼ່ງນໍ້າ, ການຮັກສາປະລິມານນໍ້າໄຫຼຕໍ່າສຸດ, ການຄຸ້ມຄອງຄຸນນະພາບນໍ້າ, ການປົກປັກຮັກສາຊີວະນາໆພັນທາງນໍ້າ, ການແກ້ໄຂກໍລະນີສຸກເສີນ, ການບູລະນະຟື້ນຟູຄວາມເສຍຫາຍທີ່ເກີດຂຶ້ນ ແລະ ອື່ນໆ ໂດຍສອດຄ່ອງກັບແຜນການຄຸ້ມຄອງອ່າງຮັບນໍ້າ, ລະບຽບການ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ; ຜູ້ພັດທະນາໂຄງການ ຕ້ອງລາຍງານ ແລະ ສະໜອງຂໍ້ມູນກ່ຽວກັບການຄຸ້ມຄອງອ່າງເກັບນໍ້າ ໃຫ້ຂະແໜງການທີ່ກ່ຽວຂ້ອງ ແລະ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ຜູ້ປະກອບການ ຕ້ອງປົກປັກຮັກສາຄຸນນະພາບນໍ້າ, ຄວາມອຸດົມສົມບູນຂອງສາຍນໍ້າ, ບໍ່ໃຫ້ຖອກເທສິ່ງເສດເຫຼືອລົງໃສ່ແມ່ນໍ້າ, ບູລະນະຟື້ນຟູຄວາມເສຍຫາຍທີ່ເກີດຂຶ້ນ, ມີສ່ວນຮ່ວມໃນການປົກປັກຮັກສາຊີວະນາໆພັນທາງນໍ້າ, ປ້ອງກັນບໍ່ໃຫ້ຕາຝັ່ງເຈື່ອນ, ຮັກສາຄວາມສວຍງາມຂອງທິວທັດທຳມະຊາດ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

**ມາດຕາ 25 (ໃໝ່) ມາດຕະການແກ້ໄຂ ສຸກເສີນໃນກໍລະນີທີ່ເກີດບັນຫາຈາກອ່າງເກັບນໍ້າ**

ໃນກໍລະນີເກີດເຫດສຸກເສີນໃນອ່າງເກັບນໍ້າ ຜູ້ພັດທະນາໂຄງການ ຫຼື ຜູ້ປະກອບການ ຕ້ອງລາຍງານຢ່າງຮີບດ່ວນໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອມີມາດຕະການແກ້ໄຂ ໃຫ້ທັນກັບສະພາບການ ເປັນຕົ້ນ ການແຈ້ງເຕືອນ, ການຊ່ວຍເຫຼືອ ແລະ ຍົກຍ້າຍປະຊາຊົນ.

ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ປະກາດເຫດສຸກເສີນພາຍໃນທ້ອງຖິ່ນຂອງຕົນ ໂດຍກຳນົດມາດຕະການແກ້ໄຂ ເພື່ອຊ່ວຍເຫຼືອ ແລະ ຍົກຍ້າຍປະຊາຊົນ ອອກຈາກພື້ນທີ່ບ່ອນເກີດເຫດສຸກເສີນ ຫຼັງຈາກນັ້ນກໍວາງແຜນຟື້ນຟູໃຫ້ກັບຄືນສູ່ສະພາບເດີມ.

ນາຍົກລັດຖະມົນຕີ ເປັນຜູ້ປະກາດເຫດສຸກເສີນ ແລະ ກຳນົດມາດຕະການແກ້ໄຂ, ຟື້ນຟູໃນຂອບເຂດທົ່ວປະເທດ ໃນກໍລະນີເກີດເຫດສຸກເສີນທີ່ມີຜົນກະທົບຮ້າຍແຮງ.

ເຈົ້າຂອງໂຄງການ ມີພັນທະ ແລະ ຄວາມຮັບຜິດຊອບໃນການປະຕິບັດມາດຕະການແກ້ໄຂກໍລະນີສຸກເສີນ ຖ້າວ່າເຫດສຸກເສີນນັ້ນຫາກເກີດຂຶ້ນ ຍ້ອນການກະທຳຂອງຕົນ.

## ພາກທີ IV
## ການປົກປັກຮັກສານ້ຳ ແລະ ຊັບພະຍາກອນນ້ຳ

### ມາດຕາ 26 (ປັບປຸງ) ການປົກປັກຮັກສານ້ຳ ແລະ ຊັບພະຍາກອນນ້ຳ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພັນທະປົກປັກຮັກສານ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ມີຄວາມອຸດົມສົມບູນ, ບໍ່ໃຫ້ກໍ່ຜົນເສຍຫາຍແກ່ນ້ຳ ແລະ ຊັບພະຍາກອນນ້ຳ ພ້ອມທັງປົກປັກຮັກສາ, ຟື້ນຟູ ແລະ ບູລະນະຊັບພະຍາກອນປ່າໄມ້ ແລະ ດິນ ໃນເຂດອ່າງຮັບນ້ຳ ຕາມແຜນຄຸ້ມຄອງຈັດສັນແຫຼ່ງນ້ຳ, ປ່າໄມ້, ທີ່ດິນ ແລະ ຕາມລະດູການຢ່າງເຂັ້ມງວດ ໂດຍສະເພາະໃນເຂດບໍລິເວນຕົ້ນກຳເນີດຂອງນ້ຳ ຫຼື ຢູ່ອ້ອມແອ້ມແຫຼ່ງນ້ຳ.

### ມາດຕາ 27 (ໃໝ່) ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນ ພື້ນທີ່ສະຫງວນໄວ້ ເພື່ອປົກປັກຮັກສາຄຸນນະພາບ ແລະ ປະລິມານຂອງນ້ຳ ເພື່ອບໍລິໂພກ ແລະ ອຸປະໂພກ, ປ້ອງກັນໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ, ອະນຸລັກພັນພືດ ແລະ ສັດນ້ຳ, ລະບົບນິເວດ, ຄຸນຄ່າທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນະທຳ, ການທ່ອງທ່ຽວ, ການສຶກສາ, ການຄົ້ນຄວ້າ ແລະ ທົດລອງວິທະຍາສາດ.

ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ມີ ດັ່ງນີ້:

1. ເຂດສະຫງວນ ເພື່ອບໍລິໂພກ ແລະ ອຸປະໂພກ;
2. ເຂດບໍລິເວນຍອດນ້ຳ;
3. ເຂດທີ່ມີຄວາມສ່ຽງຕໍ່ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ;
4. ເຂດທີ່ດິນບໍລິເວນນ້ຳ;
5. ເຂດທີ່ມີຄວາມສ່ຽງຕໍ່ຄຸນນະພາບ ແລະ ປະລິມານນ້ຳໃຕ້ດິນ;
6. ເຂດທີ່ມີຄຸນຄ່າທາງທຳມະຊາດ, ປະຫວັດສາດ, ວັດທະນະທຳ;

7. ເຂດພື້ນທີ່ອະນຸລັກຊີວະນາໆພັນທາງນ້ຳ ແລະ ເຂດບໍລິເວນແຄມນ້ຳ;

8. ເຂດພື້ນທີ່ ທີ່ມີຄວາມສ່ຽງຕໍ່ລະບົບນິເວດໃນຊຸມຊົນ ຫຼື ຕົວເມືອງ.

**ມາດຕາ 28 (ໃໝ່) ການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ລັດຖະບານ ກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳລະດັບຊາດ ຕາມການສະເໜີຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ບົນພື້ນຖານການເຫັນດີຂອງຄະນະປະຈຳສະພາແຫ່ງຊາດ.

ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳລະດັບແຂວງ ຕາມການສະເໜີຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ ບົນພື້ນຖານການເຫັນດີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳລະດັບເມືອງ ຕາມການສະເໜີຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ເທດສະບານ, ນະຄອນ ບົນພື້ນຖານການເຫັນດີຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

ນາຍບ້ານ ກຳນົດຂອບເຂດວັງສະຫງວນລະດັບບ້ານ ຕາມການສະເໜີຂອງໜ່ວຍງານເສດຖະກິດ-ການເງິນບ້ານ ໂດຍໃຫ້ສອດຄ່ອງກັບຈຸດພິເສດ ແລະ ທີ່ຕັ້ງຂອງວັງສະຫງວນພາຍໃນບ້ານຂອງຕົນ ຕາມການຕົກລົງຂອງກອງປະຊຸມບ້ານ ບົນພື້ນຖານການເຫັນດີຂອງ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດລະບຽບການລວມກ່ຽວກັບການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໂດຍປະສານສົມທົບກັບກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 29 (ໃໝ່) ການຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດ້ວຍການກຳນົດລະບຽບການ ຫຼື ປັກຫຼັກໝາຍ.

ໃນເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ບໍ່ອະນຸຍາດໃຫ້ປຸກສ້າງ, ກໍ່ສ້າງສິ່ງກີດຂວາງທີ່ປ່ຽນແປງທາງໄຫຼຂອງນ້ຳ, ຕັດຕົ້ນໄມ້ທີ່ຢູ່ໃນເຂດຕົ້ນກຳເນີດຂອງນ້ຳ ຫຼື ຢູ່ອ້ອມແຫຼ່ງນ້ຳ, ທຳການຜະລິດກະສິກຳ, ອຸດສາຫະກຳ, ລ້ຽງສັດ, ຖົມ, ດັດແປງ ຫຼື ປ່ຽນເນື້ອທີ່ດິນບໍລິເວນແມ່ນ້ຳ, ໜອງ, ບຶງ, ທາມ; ເຈາະກົ່ນ ຫຼື ປັບແປງໜ້າດິນ ທີ່ຈະກໍ່ໃຫ້ເກີດມີການເຊາະເຈື່ອນ, ຂຸດຄົ້ນຫີນ, ແຮ່ທາດ, ດິນ, ຊາຍ, ຖິ້ມຂີ້ເຫຍື້ອ ຫຼື

ສິ່ງເສດເຫຼືອ, ນ້ຳເປື້ອນ, ຂອງເບື່ອ, ວັດຖຸເຄມີ, ຖົ່ມລະເບີດ, ຝັງຊາກສົບ ຫຼື ຊາກສັດ ແລະ ອື່ນໆ ທີ່ກໍ່ຄວາມເສຍຫາຍຕໍ່ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ.

ສຳລັບການປູກຝັງ, ລ້ຽງສັດ ຕາມປະເພນີແບບຄອບຄົວ ເພື່ອລ້ຽງຊີບຂອງປະຊາຊົນຢູ່ເຂດສະຫງວນບໍລິເວນແຄມນ້ຳ ແມ່ນສາມາດນຳໃຊ້ໄດ້ ແຕ່ຕ້ອງຮັບປະກັນບໍ່ໃຫ້ມີຜົນກະທົບເສຍຫາຍຕໍ່ຄຸນນະພາບນ້ຳ ແລະ ການເຊາະເຈື່ອນຂອງຕາຝັ່ງ.

**ມາດຕາ 30 (ປັບປຸງ) ມາດຕະຖານຄຸນນະພາບນ້ຳ ແລະ ມາດຕະຖານການປ່ອຍນ້ຳເປື້ອນ**

ມາດຕະຖານຄຸນນະພາບນ້ຳ ແມ່ນ ຕົວວັດແທກ, ຫົວໜ່ວຍ, ຄ່າມາດຕະຖານຂອງຄຸນນະພາບນ້ຳ ທີ່ອີງໃສ່ຄຸນລັກສະນະທາງກາຍະພາບ, ເຄມີ ແລະ ຊີວະພາບຂອງນ້ຳ ເພື່ອເປັນເກນສົມທຽບຄຸນນະພາບນ້ຳ ຢູ່ໃນແມ່ນ້ຳ, ລຳເຊ, ຫ້ວຍ, ຮ່ອງ, ໜອງ, ບຶງ, ນ້ຳໃຕ້ດິນ ແລະ ນ້ຳອື່ນໆ ຕາມທຳມະຊາດ.

ມາດຕະຖານການປ່ອຍນ້ຳເປື້ອນ ແມ່ນ ຕົວວັດແທກຄຸນນະພາບນ້ຳ ທີ່ອີງໃສ່ຄຸນລັກສະນະທາງກາຍຍະພາບ, ເຄມີ ແລະ ຊີວະພາບຂອງນ້ຳ ເພື່ອຮູ້ວ່ານ້ຳທີ່ຈະປ່ອຍຈາກກິດຈະການຕ່າງໆນັ້ນ ຖືກຕ້ອງຕາມມາດຕະຖານການປ່ອຍນ້ຳເປື້ອນ ຫຼື ບໍ່ ເປັນຕົ້ນ ການປ່ອຍນ້ຳອອກຈາກການຂຸດຄົ້ນແຮ່ທາດ, ຈາກໂຮງງານ, ໂຮງແຮມ, ໂຮງໝໍ, ຕະຫຼາດ, ຄົວເຮືອນ, ກະສິກຳ ແລະ ຈາກກິດຈະກຳອື່ນ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບກະຊວງ, ອົງການ ອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກຳນົດມາດຕະຖານຄຸນນະພາບນ້ຳ ແລະ ມາດຕະຖານການປ່ອຍນ້ຳເປື້ອນ.

**ມາດຕາ 31 (ໃໝ່) ການອະນຸຍາດປ່ອຍນ້ຳເປື້ອນ**

ການປ່ອຍນ້ຳເປື້ອນລົງໃນແຫຼ່ງນ້ຳ ໂດຍ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງຜ່ານການບຳບັດໃຫ້ໄດ້ມາດຕະຖານການປ່ອຍນ້ຳເປື້ອນ ແລະ ຕ້ອງຂໍອະນຸຍາດນຳ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຕ້ອງໄດ້ເສຍຄ່າທຳນຽມ ແລະ ຄ່າບໍລິການ ການປ່ອຍນ້ຳເປື້ອນ ຕາມລະບຽບການ.

ນ້ຳເປື້ອນທີ່ປ່ອຍ ມີ ສາມ ຂະໜາດ ຄື ຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ໂດຍອີງໃສ່ບໍລິມາດນ້ຳເປື້ອນ ແລະ ຄວາມເຂັ້ມຂຸ້ນຂອງສານເຄມີທີ່ເຈືອປົນໃນນ້ຳເປື້ອນ.

ສຳລັບການປ່ອຍນ້ຳເປື້ອນຈາກຄົວເຮືອນ ທີ່ບໍ່ມີຜົນກະທົບຮ້າຍແຮງ ບໍ່ຈຳເປັນຕ້ອງຂໍອະນຸຍາດປ່ອຍນ້ຳເປື້ອນ.

ໃບອະນຸຍາດການປ່ອຍນ້ຳເປື້ອນ ມີອາຍຸ ສອງ ປີ ແລະ ສາມາດຕໍ່ໄດ້ ໂດຍອີງໃສ່ເງື່ອນໄຂ ແລະ ມາດຕະຖານການປ່ອຍນ້ຳເປື້ອນ.

ໃບອະນຸຍາດການປ່ອຍນ້ຳເປື້ອນ ອາດຖືກໂຈະ ຫຼື ປ່ຽນແປງ ໃນກໍລະນີ ດັ່ງນີ້:

- ເກີດໄພແຫ້ງແລ້ງ;
- ລະບົບນິເວດຖືກທຳລາຍ;
- ມີການປ່ອຍນ້ຳເປື້ອນເກີນຄ່າມາດຕະຖານ ທີ່ອະນຸຍາດ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດລະບຽບການ ກ່ຽວກັບການຄຸ້ມຄອງການປ່ອຍນ້ຳເປື້ອນ ໂດຍປະສານສົມທົບກັບກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 32 (ໃໝ່) ລະບົບຄອງ, ທໍ່ລະບາຍນ້ຳ ແລະ ອ່າງບຳບັດນ້ຳເປື້ອນ**

ໃນການວາງຜັງເມືອງ ຂອງຕົວເມືອງ ຕ້ອງສ້າງລະບົບຄອງ, ທໍ່ລະບາຍນ້ຳ ແລະ ອ່າງບຳບັດນ້ຳເປື້ອນ ເພື່ອຮັບປະກັນການປົກປັກຮັກສາ ຄຸນນະພາບນ້ຳ, ສຸຂະພາບຂອງຄົນ, ສັດ, ພືດ ແລະ ຄຸນນະພາບສິ່ງແວດລ້ອມ ຢູ່ໃນເຂດຕົວເມືອງ ພ້ອມທັງປົກປັກຮັກສາ ແລະ ສະຫງວນທີ່ດິນບໍລິເວນນ້ຳ ເປັນຕົ້ນ ໜອງ, ບຶງ ຊຶ່ງເປັນລະບົບການບຳບັດນ້ຳເປື້ອນແບບທຳມະຊາດ ທັງເປັນແຫຼ່ງຮອງຮັບນ້ຳ ເພື່ອປ້ອງກັນ ແລະ ຫຼຸດຜ່ອນໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ຢ່າງມີປະສິດທິຜົນ.

**ມາດຕາ 33 (ໃໝ່) ມົນລະພິດທາງນ້ຳ**

ມົນລະພິດທາງນ້ຳ ແມ່ນ ມົນລະພິດ ທີ່ເກີດຈາກການປົນເປື້ອນຂອງສິ່ງເປັນພິດໃນນ້ຳເກີນມາດຕະຖານສິ່ງແວດລ້ອມແຫ່ງຊາດ ທີ່ເກີດຂຶ້ນໂດຍທຳມະຊາດ ຫຼື ຈາກການກະທຳຂອງມະນຸດ ແລະ ສົ່ງຜົນກະທົບຕໍ່ ແມ່ນ້ຳ, ລຳເຊ, ຫ້ວຍ, ຮ່ອງ, ໜອງ, ບຶງ, ນ້ຳໃຕ້ດິນ, ສຸຂະພາບຂອງຄົນ, ສັດ, ພືດ, ສິ່ງ ມີຊີວິດອື່ນ ແລະ ລະບົບນິເວດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ສ້າງມົນລະພິດທາງນ້ຳ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ແລະ ຟື້ນຟູແຫຼ່ງນ້ຳ ທີ່ໄດ້ຮັບຜົນກະທົບໃຫ້ຄືນສູ່ສະພາບເດີມ ຫຼື ດີກວ່າເກົ່າ. ນອກຈາກນີ້ ຜູ້ກໍ່ຄວາມເສຍຫາຍ ຍັງຈະຖືກດຳເນີນຄະດີຕາມກົດໝາຍ.

**ມາດຕາ 34 (ໃໝ່) ທີ່ດິນບໍລິເວນນ້ຳ**

ທີ່ດິນບໍລິເວນນ້ຳ ແມ່ນ ທີ່ດິນທີ່ຢູ່ພື້ນນ້ຳ ຫຼື ຢູ່ຂອບເຂດອ້ອມແອ້ມແຫຼ່ງນ້ຳ ເປັນຕົ້ນ ເຂດພື້ນທີ່ດິນທາມ, ໜອງ, ບຶງ, ທົ່ງຫຍ້ານ້ຳຖ້ວມ, ທີ່ດິນນ້ຳອອກບໍ່, ທີ່ດິນແຄມນ້ຳ, ທີ່ດິນກາງນ້ຳ, ທີ່ດິນປົ່ງໃໝ່, ທີ່ດິນນ້ຳບົກປະ ຫຼື ກຸດ, ທີ່ດິນ ທີ່ເກີດຈາກການດັດແປງ ຫຼື ອວ່າຍແລວນ້ຳ, ນ້ຳຊັງ ຫຼື ໄຫຼຜ່ານ ທີ່ເກີດຂຶ້ນໂດຍທຳມະຊາດ ຫຼື ມະນຸດສ້າງຂຶ້ນ ຊຶ່ງມີລັກສະນະຖາວອນ ຫຼື ຊົ່ວຄາວ.

ໃນການວາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ທ້ອງຖິ່ນ ລວມທັງການວາງແຜນການນຳໃຊ້ທີ່ດິນ ຕ້ອງໃຫ້ຄວາມສຳຄັນແກ່ທີ່ດິນບໍລິເວນນ້ຳ ເພື່ອຮັກສາລະບົບນິເວດ, ການບຳບັດນ້ຳເປື້ອນແບບທຳມະຊາດ ແລະ ປ້ອງກັນໄພນ້ຳຖ້ວມ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ສຳຫຼວດ, ຈັດສັນທີ່ດິນບໍລິເວນນ້ຳ ແລະ ວາງແຜນການປົກປັກຮັກສາ, ພັດທະນາ ແລະ ຟື້ນຟູທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ການເຂົ້າຮ່ວມຂອງປະຊາຊົນໃນເຂດພື້ນທີ່ດັ່ງກ່າວ.

**ມາດຕາ 35 (ໃໝ່) ການນຳໃຊ້, ການປົກປັກຮັກສາ ແລະ ການພັດທະນາ ທີ່ດິນບໍລິເວນນ້ຳ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດພັດທະນາ ແລະ ນຳໃຊ້ທີ່ດິນບໍລິເວນນ້ຳໄດ້ ແຕ່ຕ້ອງໄດ້ຂໍອະນຸຍາດນຳ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຕ້ອງຮັບປະກັນບໍ່ສ້າງຜົນເສຍຫາຍຕໍ່ປະລິມານ ແລະ ຄຸນນະພາບຂອງນ້ຳ, ບໍ່ໃຫ້ປ່ຽນແລວນ້ຳ ແລະ ການໄຫຼຂອງນ້ຳໂດຍບໍ່ໄດ້ຮັບອະນຸຍາດ, ຫຼີກລ່ຽງບໍ່ໃຫ້ມີການເຊາະເຈື່ອນ ແລະ ໄພນ້ຳຖ້ວມ ຮັບປະກັນຄວາມຍືນຍົງຂອງລະບົບນິເວດ ໂດຍສອດຄ່ອງກັບກົດໝາຍ.

ການປົກປັກຮັກສາ ແລະ ການພັດທະນາ ທີ່ດິນບໍລິເວນນ້ຳ ຕ້ອງສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ທ້ອງຖິ່ນ, ແຜນແມ່ບົດການຈັດສັນການນຳໃຊ້ທີ່ດິນແຫ່ງຊາດ ແລະ ລະບຽບການກ່ຽວກັບການຄຸ້ມຄອງທີ່ດິນບໍລິເວນນ້ຳ ໂດຍບໍ່ໃຫ້ມີຜົນກະທົບຕໍ່ລະບົບນິເວດ ແລະ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ.

ບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຖົມທີ່ດິນບໍລິເວນນ້ຳຕາມທຳມະຊາດທີ່ກຳນົດເປັນເຂດສະຫງວນ ເປັນຕົ້ນ ໜອງ, ຄອງ, ບຶງ, ລຳເຊ.

## ພາກທີ V
## ການນຳໃຊ້ ແລະ ການບໍລິການ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ
### ໝວດທີ 1
### ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ

**ມາດຕາ 36 (ປັບປຸງ) ເປົ້າໝາຍການນຳໃຊ້ແຫຼ່ງນ້ຳ**

ເປົ້າໝາຍການນຳໃຊ້ແຫຼ່ງນ້ຳ ມີ ດັ່ງນີ້:

1. ເພື່ອການບໍລິໂພກ ແລະ ອຸປະໂພກ ຂອງພົນລະເມືອງ;
2. ເພື່ອການຊົນລະປະທານ, ການຜະລິດກະສິກຳ ແລະ ປ່າໄມ້, ການລ້ຽງສັດ ແລະ ການປະມົງ;
3. ເພື່ອການຜະລິດພະລັງງານໄຟຟ້າ ແລະ ການຂຸດຄົ້ນບໍ່ແຮ່;
4. ເພື່ອການຜະລິດອຸດສາຫະກຳ;
5. ເພື່ອການຄົມມະນາຄົມ ແລະ ຂົນສົ່ງ;

6. ເພື່ອການແພດ, ຮັກສາສຸຂະພາບອະນາໄມ;

7. ເພື່ອການພັກຜ່ອນ, ການກິລາ ແລະ ການທ່ອງທ່ຽວ;

8. ເພື່ອການນຳໃຊ້ເຂົ້າໃນເປົ້າໝາຍອື່ນ.

ແຫຼ່ງນ້ຳໃດໜຶ່ງ ສາມາດນຳໃຊ້ເຂົ້າໃນເປົ້າໝາຍໜຶ່ງ ຫຼື ຫຼາຍເປົ້າໝາຍກໍໄດ້ ແລ້ວແຕ່ກໍລະນີ ແລະ ຕາມຄວາມເໝາະສົມ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການນຳໃຊ້ແຫຼ່ງນ້ຳ ຕ້ອງສຳຫຼວດ, ກຳນົດແຫຼ່ງນ້ຳທີ່ຈະນຳໃຊ້ ແລ້ວສະເໜີຕໍ່ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອອະນຸຍາດນຳໃຊ້ນ້ຳ ຕາມລະບຽບການ.

## ມາດຕາ 37 (ໃໝ່) ການນຳໃຊ້ແຫຼ່ງນ້ຳເພື່ອບໍລິໂພກ

ແຫຼ່ງນ້ຳເພື່ອບໍລິໂພກ ແມ່ນ ແຫຼ່ງນ້ຳທີ່ຖືກຈັດສັນໄວ້ ເພື່ອຮັບໃຊ້ສະເພາະການບໍລິໂພກຂອງພົນລະເມືອງເທົ່ານັ້ນ ໂດຍບໍ່ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ນຳໃຊ້ເຂົ້າໃນເປົ້າໝາຍອື່ນຢ່າງເດັດຂາດ.

ໃນເຂດບໍລິເວນແຫຼ່ງນ້ຳເພື່ອບໍລິໂພກນີ້ ບໍ່ອະນຸຍາດໃຫ້ມີການປຸກສ້າງໂຮງໝໍ, ຕະຫຼາດ, ໂຮງງານ, ຮ້ານອາຫານ, ຟາມລ້ຽງສັດ, ໂຮງແຮມ ຫຼື ກິດຈະການອື່ນ ທີ່ຈະສົ່ງຜົນກະທົບບໍ່ດີໃຫ້ແກ່ຄຸນນະພາບນ້ຳ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດແຫຼ່ງນ້ຳ ແລະ ຂອບເຂດບໍລິເວນແຫຼ່ງນ້ຳ ເພື່ອບໍລິໂພກ.

## ມາດຕາ 38 (ປັບປຸງ) ສິດໃນການນຳໃຊ້ນ້ຳ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີສິດນຳໃຊ້ນ້ຳ ເຂົ້າໃນເປົ້າໝາຍໃດໜຶ່ງ ແຕ່ຕ້ອງປະຢັດ, ສົມເຫດສົມຜົນ, ມີປະສິດທິຜົນ ແລະ ສົ່ງຜົນກະທົບໜ້ອຍທີ່ສຸດຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ.

ການນຳໃຊ້ນ້ຳ ມີ ສາມ ຂະໜາດ: ຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່.

ການນຳໃຊ້ນ້ຳ ຂະໜາດກາງ ແລະ ຂະໜາດໃຫຍ່ ຕ້ອງໄດ້ຂໍອະນຸຍາດ ນຳຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຕ້ອງເສຍຄ່ານຳໃຊ້ນ້ຳ, ຄ່າທຳນຽມ ແລະ ຄ່າບໍລິການຕາມລະບຽບການ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດລະບຽບການນຳໃຊ້ນ້ຳ ແຕ່ລະຂະໜາດ ໂດຍປະສານສົມທົບກັບກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 39 (ປັບປຸງ) ການນຳໃຊ້ນ້ຳຂະໜາດນ້ອຍ**

ການນຳໃຊ້ນ້ຳຂະໜາດນ້ອຍ ແມ່ນ ການນຳໃຊ້ນ້ຳ ດັ່ງນີ້:

1. ນຳໃຊ້ ໃນການບໍລິໂພກ ແລະ ອຸປະໂພກ ເພື່ອລ້ຽງຊີບ;

2. ນຳໃຊ້ເຂົ້າໃນການປູກຝັງ ແລະ ລ້ຽງສັດ ຂອງປະຊາຊົນ ເພື່ອລ້ຽງຊີບ;

3. ນຳໃຊ້ເຂົ້າໃນຊົນລະປະທານ ໜຶ່ງພັນຫ້າຮ້ອຍ ແມັດກ້ອນ ຕໍ່ ເຮັກຕາ ຕໍ່ວັນ.

ການນຳໃຊ້ນ້ຳຂະໜາດນ້ອຍ ບໍ່ຕ້ອງຂໍອະນຸຍາດ, ບໍ່ເສຍຄ່າທຳນຽມ ແລະ ຄ່າບໍລິການການນຳໃຊ້ນ້ຳ.

**ມາດຕາ 40 (ປັບປຸງ) ການນຳໃຊ້ນ້ຳຂະໜາດກາງ**

ການນຳໃຊ້ນ້ຳຂະໜາດກາງ ແມ່ນ ການນຳໃຊ້ນ້ຳ ເພື່ອເປົ້າໝາຍ ດັ່ງນີ້:

1. ການຜະລິດພະລັງງານໄຟຟ້າ ທີ່ບັນຈຸບໍລິມາດນ້ຳ ຫຼາຍກວ່າ ໜຶ່ງແສນ ຫາ ສອງຮ້ອຍ ລ້ານ ແມັດກ້ອນ, ມີເນື້ອທີ່ອ່າງເກັບນ້ຳ ໜຶ່ງຮ້ອຍ ຫາ ໜຶ່ງພັນຫ້າຮ້ອຍ ເຮັກຕາ;

2. ການນຳໃຊ້ເຂົ້າໃນຊົນລະປະທານ ໜຶ່ງພັນຫ້າຮ້ອຍ ຫາ ໜຶ່ງແສນຫ້າສິບພັນ ແມັດກ້ອນ ຕໍ່ກິດຈະການ ຕໍ່ວັນ;

3. ການນຳໃຊ້ນ້ຳເຂົ້າໃນອຸດສະຫະກຳ ສິບຫ້າແມັດກ້ອນ ຫາ ໜຶ່ງພັນແມັດກ້ອນ ຕໍ່ວັນ;

4. ການນຳໃຊ້ນ້ຳເຂົ້າໃນການຜະລິດແຮ່ທາດ ສິບຫ້າແມັດກ້ອນ ຫາ ໜຶ່ງພັນແມັດກ້ອນ ຕໍ່ວັນ.

**ມາດຕາ 41 (ປັບປຸງ) ການນຳໃຊ້ນ້ຳຂະໜາດໃຫຍ່**

ການນຳໃຊ້ນ້ຳຂະໜາດໃຫຍ່ ແມ່ນ ການນຳໃຊ້ນ້ຳ ເພື່ອເປົ້າໝາຍ ດັ່ງນີ້:

1. ການຜະລິດພະລັງງານໄຟຟ້າ ຫຼາຍກວ່າ ສອງຮ້ອຍລ້ານ ແມັດກ້ອນ ຫຼື ມີເນື້ອທີ່ອ່າງເກັບນ້ຳ ຫຼາຍກວ່າ ໜຶ່ງພັນຫ້າຮ້ອຍ ເຮັກຕາ;

2. ການນຳໃຊ້ເຂົ້າໃນຊົນລະປະທານ ຫຼາຍກວ່າ ໜຶ່ງແສນຫ້າສິບພັນ ແມັດກ້ອນ ຕໍ່ກິດຈະການ ຕໍ່ວັນ;

3. ການນຳໃຊ້ນ້ຳເຂົ້າໃນອຸດສະຫະກຳ ຫຼາຍກວ່າ ໜຶ່ງພັນແມັດກ້ອນ ຕໍ່ວັນ;

4. ການນຳໃຊ້ນ້ຳເຂົ້າໃນການຜະລິດແຮ່ທາດ ຫຼາຍກວ່າ ໜຶ່ງພັນແມັດກ້ອນ ຕໍ່ວັນ.

**ມາດຕາ 42 (ໃໝ່) ໃບອະນຸຍາດນຳໃຊ້ນ້ຳ**

ໃບອະນຸຍາດນຳໃຊ້ນ້ຳ ແມ່ນ ເອກະສານທາງການ ທີ່ອະນຸຍາດນຳໃຊ້ນ້ຳ ໃຫ້ແກ່ຜູ້ໄດ້ຮັບສິດນຳໃຊ້.

ການອອກໃບອະນຸຍາດນຳໃຊ້ນ້ຳ ໃຫ້ປະຕິບັດຕາມລະບຽບການກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 43 (ໃໝ່) ການໂຈະ, ການປ່ຽນແປງ ແລະ ການຖອນໃບອະນຸຍາດນຳໃຊ້ນ້ຳ**

ໃບອະນຸຍາດນຳໃຊ້ນ້ຳ ອາດຖືກໂຈະ ຫຼື ປ່ຽນແປງ ຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ມີໄພແຫ້ງແລ້ງ ຫຼື ມີເຫດສຸກເສີນ;
2. ຮັກສາປະລິມານນ້ຳໄຫຼຕ່ຳສຸດ;
3. ມີການຮ້ອງຂໍຂອງຜູ້ພັດທະນາໂຄງການ ທີ່ໄດ້ຮັບໃບອະນຸຍາດນຳໃຊ້ນ້ຳ;
4. ມີການຮ້ອງທຸກຂອງປະຊາຊົນ;
5. ມີການລະເມີດລະບຽບການນຳໃຊ້ນ້ຳ ທີ່ບໍ່ສົ່ງຜົນກະທົບຮ້າຍແຮງ.

ໃບອະນຸຍາດນຳໃຊ້ນ້ຳ ຈະຖືກຖອນຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ມີການໂອນໃບອະນຸຍາດນຳໃຊ້ນ້ຳ ໃຫ້ຜູ້ອື່ນໂດຍບໍ່ໄດ້ຮັບອະນຸຍາດ;
2. ມີຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;
3. ມີຄວາມຈຳເປັນນຳໃຊ້ ເພື່ອສາທາລະນະປະໂຫຍດ ຊຶ່ງຕ້ອງໄດ້ຮັບການຊົດເຊີຍຕາມຄວາມເໝາະສົມ;
4. ມີຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຢ່າງຮ້າຍແຮງ;
5. ມີການລະເມີດລະບຽບການນຳໃຊ້ນ້ຳ ທີ່ມີຜົນກະທົບຮ້າຍແຮງ ຫຼື ພາຍຫຼັງໄດ້ຕັກເຕືອນແລ້ວ.

**ມາດຕາ 44 (ໃໝ່) ການຂຸດຄົ້ນຫີນແຮ່, ຊາຍ ແລະ ດິນຕົມ ໃນແຫຼ່ງນ້ຳ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ຂຸດຄົ້ນຫີນແຮ່, ຊາຍ ແລະ ດິນຕົມ ໃນແຫຼ່ງນ້ຳ ຕ້ອງຂໍອະນຸຍາດນຳຂະແໜງການທີ່ກ່ຽວຂ້ອງ ບົນພື້ນຖານການປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຍົກເວັ້ນການນຳໃຊ້ໃນຄົວເຮືອນຂອງປະຊາຊົນ.

ການຂຸດຄົ້ນຫີນ, ແຮ່, ຊາຍ ແລະ ຕົມ ໃນແຫຼ່ງນ້ຳ ຕ້ອງບໍ່ໃຫ້ມີການປ່ຽນແປງການໄຫຼ, ແລວນ້ຳ, ບໍ່ໃຫ້ຕາຝັ່ງເຈື່ອນ, ບໍ່ກະທົບຕໍ່ລະບົບນິເວດໃນນ້ຳ, ຄຸນນະພາບນ້ຳ ແລະ ຕ້ອງປະຕິບັດຕາມມາດຕະຖານທາງດ້ານເຕັກນິກ, ກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ການນຳໃຊ້ນ້ຳໃຕ້ດິນ

**ມາດຕາ 45 (ໃໝ່) ນ້ຳໃຕ້ດິນ**

ນ້ຳໃຕ້ດິນ ແມ່ນ ນ້ຳທຳມະຊາດ ທີ່ຢູ່ພື້ນດິນ ເຊັ່ນ ນ້ຳສ້າງ, ນ້ຳບາດານ, ນ້ຳອອກບໍ່, ນ້ຳລອດພື້ນ.

### ມາດຕາ 46 (ໃໝ່) ເປົ້າໝາຍການນຳໃຊ້ນ້ຳໃຕ້ດິນ

ເປົ້າໝາຍການນຳໃຊ້ນ້ຳໃຕ້ດິນ ມີ ດັ່ງນີ້:

1. ເພື່ອການບໍລິໂພກ ແລະ ອຸປະໂພກ ຂອງພົນລະເມືອງ;
2. ເພື່ອການຊົນລະປະທານ, ການລ້ຽງສັດ, ການຜະລິດກະສິກຳ ແລະ ປ່າໄມ້;
3. ເພື່ອການຂຸດຄົ້ນບໍ່ແຮ່;
4. ເພື່ອການຜະລິດອຸດສາຫະກຳ;
5. ເພື່ອການແພດ, ຮັກສາສຸຂະພາບອະນາໄມ;
6. ເພື່ອການນຳໃຊ້ເຂົ້າໃນເປົ້າໝາຍອື່ນຕາມການອະນຸຍາດ.

ນ້ຳໃຕ້ດິນ ສາມາດນຳໃຊ້ເຂົ້າໃນເປົ້າໝາຍໜຶ່ງ ຫຼື ຫຼາຍເປົ້າໝາຍກໍໄດ້ ແລ້ວແຕ່ກໍລະນີ ແລະ ຕາມຄວາມເໝາະສົມ.

### ມາດຕາ 47 (ໃໝ່) ສິດໃນການນຳໃຊ້ນ້ຳໃຕ້ດິນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີສິດນຳໃຊ້ນ້ຳໃຕ້ດິນ ເຂົ້າໃນເປົ້າໝາຍໃດໜຶ່ງ ແຕ່ຕ້ອງປະຢັດ, ສົມເຫດສົມຜົນ, ມີປະສິດທິຜົນ ແລະ ສົ່ງຜົນກະທົບໜ້ອຍທີ່ສຸດຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ.

ການນຳໃຊ້ນ້ຳໃຕ້ດິນ ມີ ສາມ ຂະໜາດ: ຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່.

ການນຳໃຊ້ນ້ຳໃຕ້ດິນຂະໜາດນ້ອຍ ທີ່ມີປະລິມານແຕ່ ຊາວ ແມັດກ້ອນລົງມາ ບໍ່ຈຳເປັນຕ້ອງຂໍອະນຸຍາດນຳໃຊ້ນ້ຳ ແລະ ບໍ່ຕ້ອງເສຍຄ່ານຳໃຊ້ຊັບພະຍາກອນນ້ຳ, ຄ່າທຳນຽມ ແລະ ຄ່າບໍລິການ ແຕ່ຕ້ອງແຈ້ງຕໍ່ອົງການປົກຄອງບ້ານ.

ການນຳໃຊ້ນ້ຳໃຕ້ດິນຂະໜາດກາງ ທີ່ມີປະລິມານຫຼາຍກວ່າ ຊາວ ແມັດກ້ອນ ຫາ ຫ້າສິບ ແມັດກ້ອນ ຕ້ອງຂໍອະນຸຍາດນຳ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ແລະ ຕ້ອງເສຍຄ່ານຳໃຊ້ຊັບພະຍາກອນນ້ຳ, ຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ.

ການນຳໃຊ້ນ້ຳໃຕ້ດິນຂະໜາດໃຫຍ່ ທີ່ມີປະລິມານຫຼາຍກວ່າ ຫ້າສິບ ແມັດກ້ອນຕໍ່ວັນ ຕ້ອງຂໍອະນຸຍາດນຳ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຕ້ອງເສຍຄ່ານຳໃຊ້ຊັບພະຍາກອນນ້ຳ, ຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດລະບຽບການ ກ່ຽວກັບການຄຸ້ມຄອງນ້ຳໃຕ້ດິນ ໂດຍປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

## ໝວດທີ 3
## ການບໍລິການ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ

**ມາດຕາ 48 (ໃໝ່) ການບໍລິການ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ**

ການບໍລິການ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ ມີ ດັ່ງນີ້:

1. ໃຫ້ຄຳປຶກສາ;
2. ການຂຸດເຈາະ ຫຼື ຊີເຈາະ ນ້ຳໃຕ້ດິນ;
3. ການວິໄຈຄຸນນະພາບນ້ຳ;
4. ການບໍລິການດ້ານອື່ນ.

**ມາດຕາ 49 (ໃໝ່) ການບໍລິການໃຫ້ຄຳປຶກສາ**

ການບໍລິການໃຫ້ຄຳປຶກສາ ແມ່ນ ການໃຫ້ບໍລິການ ກ່ຽວກັບການສຶກສາ, ສຳຫຼວດ, ອອກແບບ, ວິເຄາະ, ປະເມີນ ແລະ ສ້າງບົດລາຍງານສະພາບນ້ຳ ແລະ ຊັບພະຍາກອນນ້ຳຂອງໂຄງການລົງທຶນ ຫຼື ກິດຈະການພັດທະນາ ພ້ອມທັງສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດການ້ຳ ແລະ ຊັບພະຍາກອນນ້ຳ.

ຜູ້ບໍລິການໃຫ້ຄຳປຶກສາ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີນັກຊ່ຽວຊານສະເພາະດ້ານ ທີ່ກ່ຽວຂ້ອງກັບນ້ຳ ແລະ ຊັບພະຍາກອນນ້ຳ ຊຶ່ງມີວຸດທິການສຶກສາປະລິນຍາໂທຂຶ້ນໄປ ຢ່າງໜ້ອຍ ສາມ ຄົນ ແລະ ມີປະສົບການ ສາມປີ ຂຶ້ນໄປ;

2. ມີນັກວິຊາການລະດັບປະລິນຍາຕີ ຢ່າງໜ້ອຍ ສາມ ຄົນ ແລະ ມີປະສົບການ ຢ່າງໜ້ອຍ ສອງປີ ຂຶ້ນໄປ;

3. ມີຫ້ອງການ ແລະ ເຄື່ອງມືຮັບໃຊ້ວິຊາສະເພາະ ຢ່າງພຽງພໍ.

**ມາດຕາ 50 (ໃໝ່) ການບໍລິການຂຸດເຈາະ ຫຼື ຊີເຈາະ ນ້ຳໃຕ້ດິນ**

ການບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ແມ່ນ ການໃຫ້ບໍລິການກ່ຽວກັບການສຶກສາ, ສຳຫຼວດ, ຂຸດເຈາະ ຫຼື ຊີເຈາະຊັ້ນດິນ, ປະເມີນປະລິມານ ແລະ ກວດຄຸນນະພາບນ້ຳໃຕ້ດິນ.

ຜູ້ບໍລິການຂຸດເຈາະ ຫຼື ຊີເຈາະ ນ້ຳໃຕ້ດິນ ຂະໜາດກາງ ແລະ ຂະໜາດໃຫຍ່ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີນັກທໍລະນີວິທະຍາ ທີ່ມີວຸດທິການສຶກສາຊັ້ນກາງຂຶ້ນໄປ ຢ່າງໜ້ອຍ ໜຶ່ງ ຄົນ ແລະ ມີປະສົບການຢ່າງໜ້ອຍ ສອງ ປີ;

2. ມີນັກວິຊາການທີ່ມີປະສົບການ ດ້ານການຂຸດເຈາະ ຫຼື ຊີເຈາະ ຢ່າງໜ້ອຍ ໜຶ່ງ ຄົນ ແລະ ມີປະສົບການຢ່າງໜ້ອຍ ສອງ ປີ;

3. ມີຫ້ອງການ ແລະ ເຄື່ອງກົນຈັກທີ່ໄດ້ມາດຕະຖານ ແລະ ມີອຸປະກອນຂຸດເຈາະ ຫຼື ຊີເຈາະຄົບຊຸດ.

ສຳລັບການບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຂະໜາດນ້ອຍ ຕ້ອງໃຫ້ມີນັກວິຊາການທີ່ໄດ້ຜ່ານການຝຶກອົບຮົມ.

ໃນກໍລະນີ ການຂຸດເຈາະ ຫຼື ຊີເຈາະ ຫາກພົບເຫັນວັດຖຸບູຮານ, ຊາກດຶກດຳບັນ ຫຼື ແຮ່ທາດມີຄ່າ ຫຼື ວັດຖຸທາງດ້ານວັດທະນະທຳ, ເສດຖະກິດ ຫຼື ທາງດ້ານການສຶກສາ ໃນດ້ານທໍລະນີວິທະຍາ ຜູ້ໃຫ້ບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຕ້ອງລາຍງານໃຫ້ພາກສ່ວນກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຊາບທັນທີ.

## ມາດຕາ 51 (ໃໝ່) ການບໍລິການວິໄຈຄຸນນະພາບນ້ຳ

ການບໍລິການວິໄຈຄຸນນະພາບນ້ຳ ແມ່ນ ການໃຫ້ບໍລິການ ກ່ຽວກັບການວິເຄາະ, ວິໄຈຄຸນນະພາບນ້ຳ.

ຜູ້ບໍລິການວິໄຈຄຸນນະພາບນ້ຳ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຜູ້ຄວບຄຸມຫ້ອງທົດລອງ ທີ່ມີວຸດທິການສຶກສາລະດັບປະລິນຍາໂທຂຶ້ນໄປ ໃນສາຂາວິຊາເຄມີ, ວິທະຍາສາດ-ສິ່ງແວດລ້ອມ, ວິທະຍາສາດທົ່ວໄປ ຫຼື ສາຂາອື່ນທີ່ກ່ຽວຂ້ອງ ແລະ ມີປະສົບການດ້ານການວິໄຈ ຢ່າງໜ້ອຍ ຫ້າ ປີ;

2. ມີພະນັກງານວິໄຈປະຈຳຫ້ອງທົດລອງ ຢ່າງໜ້ອຍ ສາມ ຄົນ ທີ່ມີວຸດທິການສຶກສາລະດັບປະລິນຍາຕີຂຶ້ນໄປ ໃນສາຂາວິຊາເຄມີ, ວິທະຍາສາດ-ສິ່ງແວດລ້ອມ, ວິທະຍາສາດທົ່ວໄປ ຫຼື ສາຂາອື່ນທີ່ກ່ຽວຂ້ອງ ແລະ ມີປະສົບການດ້ານການວິໄຈ ຢ່າງໜ້ອຍ ສາມ ປີ;

3. ມີຫ້ອງທົດລອງ ພ້ອມດ້ວຍອຸປະກອນຄົບຊຸດ, ມີລະບົບການວິໄຈ ທີ່ໄດ້ມາດຕະຖານສາກົນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຈະດຳເນີນການບໍລິການວິໄຈຄຸນນະພາບນ້ຳ ລວມທັງການສ້າງຕັ້ງຫ້ອງທົດລອງວິໄຈດັ່ງກ່າວ ຕ້ອງຂໍອະນຸຍາດນຳກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

## ມາດຕາ 52 (ໃໝ່) ການດຳເນີນການບໍລິການ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນການບໍລິການ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ຍື່ນຄຳຮ້ອງ ພ້ອມດ້ວຍເອກະສານປະກອບ ນຳຂະແໜງການທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ຕ້ອງໄດ້ຂໍອະນຸຍາດທາງດ້ານວິຊາການນຳຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

## ພາກທີ VI
## ການປ້ອງກັນ ແລະ ຕ້ານຜົນເສຍຫາຍຈາກນ້ຳ

### ມາດຕາ 53 (ປັບປຸງ) ຜົນເສຍຫາຍຈາກນ້ຳ

ຜົນເສຍຫາຍຈາກນ້ຳ ແມ່ນ ຄວາມເສຍຫາຍທີ່ເກີດຂຶ້ນຈາກນ້ຳ ຍ້ອນໄພທຳມະຊາດ ຫຼື ການກະທຳຂອງຄົນ ເປັນຕົ້ນ ນ້ຳຖ້ວມ, ນ້ຳໄຫຼສຸ, ນ້ຳມາກ, ນ້ຳຍື່ງ, ການເກີດນ້ຳເຄັມ, ນ້ຳເປື້ອນ, ນ້ຳຂຸ່ນ, ນ້ຳຕື້ນເຂີນ, ແຫ້ງແລ້ງ, ການເຊາະເຈື່ອນ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ວາງແຜນການ ແລະ ກຳນົດມາດຕະການແກ້ໄຂຜົນເສຍຫາຍຈາກນ້ຳ.

### ມາດຕາ 54 (ປັບປຸງ) ການປ້ອງກັນ ແລະ ຕ້ານໄພນ້ຳຖ້ວມ ແລະ ແຫ້ງແລ້ງ

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແຈ້ງຂໍ້ມູນດ້ານອຸຕຸ ແລະ ອຸທົກກະສາດ ໃຫ້ອົງການປົກຄອງທ້ອງຖິ່ນ, ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານວິຊາການ ໃນການຄຸ້ມຄອງຄວາມສ່ຽງດ້ານໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ, ການຕິດຕາມກວດກາ ແລະ ປະເມີນປະສິດທິພາບຂອງການຈັດຕັ້ງປະຕິບັດລະບຽບການທີ່ກ່ຽວຂ້ອງກັບຄວາມສ່ຽງຕໍ່ໄພທຳມະຊາດ ລວມທັງການແຈ້ງເຕືອນ ແລະ ການຊ່ວຍເຫຼືອປະຊາຊົນ ໃຫ້ມີການກຽມຄວາມພ້ອມໃນການຮັບມືກັບໄພດັ່ງກ່າວ ຢ່າງທັນການ.

ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການໃນການນຳພາ, ກະກຽມແຜນການ ແລະ ນຳໃຊ້ມາດຕະການຕ່າງໆທີ່ມີປະສິດທິຜົນ, ປະຕິບັດຕາມແຜນການລວມ ແລະ ຄຳແນະນຳ ທີ່ຂັ້ນເທິງວາງອອກ ກ່ຽວກັບການປ້ອງກັນ ແລະ ຕ້ານໄພນ້ຳຖ້ວມ ແລະ ແຫ້ງແລ້ງ. ໃນກໍລະນີທີ່ມີໄພນ້ຳຖ້ວມເກີດຂຶ້ນກະທັນຫັນ ອົງການປົກຄອງທ້ອງຖິ່ນບ່ອນນັ້ນ ຕ້ອງເປັນເຈົ້າການໃນການແກ້ໄຂຢ່າງທັນການ.

ອົງການປົກຄອງທ້ອງຖິ່ນ ມີໜ້າທີ່ຂຶ້ນແຜນງົບປະມານ, ລະດົມວັດຖຸປະກອນ, ແຮງງານ ແລະ ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເຂົ້າໃນການປ້ອງກັນ ແລະ ຕ້ານໄພນ້ຳຖ້ວມ ແລະ ແຫ້ງແລ້ງ. ເມື່ອວຽກງານສິ້ນສຸດແລ້ວ ຕ້ອງສົ່ງວັດຖຸປະກອນນັ້ນຄືນໃຫ້ເຈົ້າຂອງ ແລະ ໃຊ້ແທນຄ່າເສຍຫາຍຂອງວັດຖຸປະກອນດັ່ງກ່າວ ຕາມຄວາມເໝາະສົມ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພັນທະໃຫ້ຄວາມຮ່ວມມືແກ່ອົງການປົກຄອງທ້ອງຖິ່ນ ໃນການປ້ອງກັນ ແລະ ຕ້ານໄພນ້ຳຖ້ວມ ແລະ ແຫ້ງແລ້ງ.

# ພາກທີ VII
# ການບູລະນະຟື້ນຟູ ນ້ຳ ແລະ ຊັບພະຍາກອນນ້ຳ

**ມາດຕາ 55 (ໃໝ່) ນ້ຳ ແລະ ຊັບພະຍາກອນນ້ຳ ທີ່ຖືກທຳລາຍ ຫຼື ເສື່ອມໂຊມ**

ນ້ຳ ແລະ ຊັບພະຍາກອນນ້ຳ ທີ່ຖືກທຳລາຍ ຫຼື ເສື່ອມໂຊມ ແມ່ນ ການປ່ຽນແປງທາງດ້ານປະລິມານ ແລະ ຄຸນນະພາບຂອງນ້ຳ ແລະ ຊັບພະຍາກອນນ້ຳ ທາງດ້ານກາຍຍະພາບ, ຊີວະພາບ ແລະ ເຄມີ ໃນທາງທີ່ບໍ່ດີ ເປັນຕົ້ນ ການບົກແຫ້ງ, ຕື້ນເຂີນຂອງສາຍນ້ຳ ແລະ ນ້ຳໃຕ້ດິນ, ການປົນເປື້ອນສານພິດຈາກ ການປ່ອຍນ້ຳເປື້ອນຂອງຊຸມຊົນ, ແຫຼ່ງບໍລິການ, ອຸດສາຫະກຳປຸງແຕ່ງ, ບໍ່ແຮ່, ກະສິກຳ ແລະ ກິດຈະກຳອື່ນໆ.

**ມາດຕາ 56 (ໃໝ່) ການບູລະນະຟື້ນຟູ ນ້ຳ ແລະ ຊັບພະຍາກອນນ້ຳ**

ການບູລະນະຟື້ນຟູ ນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນ ການເຮັດໃຫ້ປະລິມານ ແລະ ຄຸນນະພາບ ຂອງນ້ຳ ແລະ ຊັບພະຍາກອນນ້ຳ ທີ່ຖືກທຳລາຍ ຫຼື ເສື່ອມໂຊມກັບຄືນສູ່ສະພາບດີ ຫຼື ປົກກະຕິດ້ວຍການນຳໃຊ້ວິທີການຕ່າງໆ ເປັນຕົ້ນ ການປູກປ່າ, ການຮັກສາປ່າຍອດນ້ຳ, ການນຳໃຊ້ນ້ຳແບບປະຢັດ, ການສົ່ງເສີມການນຳໃຊ້ຝຸ່ນຊີວະພາບ, ການຈຳກັດການຖິ້ມຂີ້ເຫຍື້ອ ແລະ ການບຳບັດນ້ຳເປື້ອນ.

ການບຳບັດນ້ຳເປື້ອນໃນແຫຼ່ງນ້ຳຕ່າງໆ ຕ້ອງຜ່ານຂະບວນການທາງເຄມີ, ທາງດ້ານຊີວະວິທະຍາ, ທາງດ້ານກາຍຍະພາບ, ທາງດ້ານກາຍຍະພາບ-ເຄມີ ແລະ ດ້ວຍວິທີການອື່ນ.

ວິທີການ ແລະ ຂັ້ນຕອນການບຳບັດນ້ຳເປື້ອນແຕ່ລະດ້ານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 57 (ໃໝ່) ຄວາມຮັບຜິດຊອບໃນການບູລະນະຟື້ນຟູນ້ຳ ແລະ ຊັບພະຍາກອນນ້ຳ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນໂຄງການລົງທຶນ ຫຼື ກິດຈະການຕ່າງໆ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ນ້ຳ ແລະ ຊັບພະຍາກອນນ້ຳ ຕ້ອງຮັບຜິດຊອບແກ້ໄຂ, ບູລະນະຟື້ນຟູຄືນ ສິ່ງທີ່ຖືກທຳລາຍ ຫຼື ເສື່ອມໂຊມນັ້ນ ໂດຍມີການຕິດຕາມກວດກາຂອງອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ.

ໃນກໍລະນີເກີດໄພທຳມະຊາດ ຊຶ່ງໄດ້ສ້າງຄວາມເສຍຫາຍແກ່ນ້ຳ ແລະ ຊັບພະຍາກອນນ້ຳ ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ຕ້ອງປະສານສົມທົບກັນ ເພື່ອວາງມາດຕະການຟື້ນຟູຄືນບ່ອນດັ່ງກ່າວ. ສ່ວນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງໄດ້ປະກອບສ່ວນທາງດ້ານທຶນຮອນ, ສະຕິປັນຍາ, ເຫື່ອແຮງ ແລະ ວັດຖູປະກອນຕ່າງໆ

## ພາກທີ VIII

## ທາດສະພາບ

**ມາດຕາ 58 (ປັບປຸງ) ທາດສະພາບ**

ທາດສະພາບ ແມ່ນ ສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບຕາມທຳມະຊາດ ຫຼື ຕາມກົດໝາຍ.

**ມາດຕາ 59 (ປັບປຸງ) ທາດສະພາບຕາມທຳມະຊາດ**

ຜູ້ນຳໃຊ້ທີ່ດິນຕອນເທິງ ບໍ່ມີສິດກີດກັ້ນການໄຫຼປົກກະຕິຂອງນ້ຳ ຊຶ່ງຈະສ້າງຄວາມເສຍຫາຍໃຫ້ແກ່ຜູ້ຊົມໃຊ້ນ້ຳຢູ່ໃນທີ່ດິນຕອນລຸ່ມ.

ໃນກໍລະນີທີ່ມີການກີດກັ້ນ ຊຶ່ງກໍ່ຄວາມເສຍຫາຍແກ່ຜູ້ຊົມໃຊ້ນ້ຳຢູ່ທີ່ດິນຕອນລຸ່ມນັ້ນ ຜູ້ນຳໃຊ້ທີ່ດິນຕອນເທິງຈະຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍ.

ຜູ້ນຳໃຊ້ທີ່ດິນຕອນລຸ່ມ ຕ້ອງໄດ້ໃຫ້ນ້ຳທີ່ໄຫຼ ໂດຍທຳມະຊາດຈາກທີ່ດິນຕອນເທິງລົງສູ່ ຫຼື ຜ່ານທີ່ດິນຂອງຕົນ.

ໃນກໍລະນີທີ່ຜູ້ນຳໃຊ້ທີ່ດິນຕອນລຸ່ມ ຫາກໄດ້ກັກຕັນນ້ຳ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜູ້ນຳໃຊ້ທີ່ດິນຕອນເທິງ ຜູ້ນຳໃຊ້ທີ່ດິນຕອນລຸ່ມດັ່ງກ່າວນັ້ນ ກໍຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນນັ້ນ ພ້ອມທັງແກ້ໄຂໃຫ້ນ້ຳໄຫຼຕາມທຳມະຊາດ.

**ມາດຕາ 60 (ປັບປຸງ) ທາດສະພາບຕາມກົດໝາຍ**

ຜູ້ທີ່ໄດ້ປຸກສ້າງ ຫຼື ຜູ້ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການໃດໜຶ່ງ ມີສິດໄດ້ຮັບທາງຜ່ານຂອງນ້ຳທຸກປະເພດ ລວມທັງນ້ຳເປື້ອນ ໂດຍໃຊ້ທໍ່ ຫຼື ຂຸດຮ່ອງຜ່ານທີ່ດິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແຕ່ຕ້ອງມີມາດຕະການຢ່າງເໝາະສົມ ແລະ ບໍ່ໃຫ້ກໍ່ຄວາມເສຍຫາຍແກ່ຜູ້ນຳໃຊ້ທີ່ດິນຕອນທີ່ນ້ຳໄຫຼຜ່ານນັ້ນ.

ໃນກໍລະນີຜູ້ທີ່ໄດ້ປຸກສ້າງ ຫຼື ຜູ້ທີ່ໄດ້ຮັບອະນຸຍາດນັ້ນ ຫາກໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ນຳໃຊ້ທີ່ດິນທີ່ໃຫ້ນ້ຳຜ່ານ, ຜູ້ກ່ຽວ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດຈາກກໍລະນີດັ່ງກ່າວ ຕ້ອງໃຊ້ແທນຄ່າເສຍຫາຍຕາມຄວາມເໝາະສົມ.

ຖ້າວ່າຜູ້ນຳໃຊ້ທີ່ດິນ ທີ່ໃຫ້ນ້ຳຜ່ານນັ້ນ ຫາກໄດ້ຮັບຜົນປະໂຫຍດນຳແລ້ວ ກໍບໍ່ໃຫ້ຄິດໄລ່ຄ່າເສຍຫາຍນຳອີກ ເວັ້ນເສຍແຕ່ຄວາມເສຍຫາຍນັ້ນຫາກມີຫຼວງຫຼາຍ ຊຶ່ງຕ້ອງໄດ້ມີການຄິດໄລ່ທົດແທນຢ່າງເໝາະສົມ.

**ມາດຕາ 61 (ປັບປຸງ) ສິດຂອງຜູ້ນຳໃຊ້ທີ່ດິນ ຫຼື ຜູ້ທີ່ຢູ່ໃກ້ຄຽງທີ່ດິນ ທີ່ເປັນທາງຜ່ານຂອງນ້ຳ**

ຜູ້ນຳໃຊ້ທີ່ດິນ ຫຼື ຜູ້ທີ່ຢູ່ໃກ້ຄຽງທີ່ດິນ ທີ່ເປັນທາງຜ່ານຂອງນ້ຳ ມີສິດໃຊ້ສິ່ງກໍ່ສ້າງທີ່ເປັນທາງໄຫຼຂອງນ້ຳ ເປັນຕົ້ນ ທໍ່ນ້ຳ ຫຼື ຮ່ອງນ້ຳ ຕາມທີ່ກຳນົດໄວ້ໃນມາດຕາ 60 ຂອງກົດໝາຍສະບັບນີ້ ແຕ່ຕ້ອງປະກອບສ່ວນໃນການໃຊ້ຈ່າຍຕ່າງໆ ເຊັ່ນ ຄ່າກໍ່ສ້າງ, ຄ່ານຳໃຊ້ ແລະ ຄ່າບົວລະບັດຮັກສາ ຕາມສ່ວນທີ່ຕົນນຳໃຊ້ນັ້ນ.

**ມາດຕາ 62 (ປັບປຸງ) ສິດຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ**

ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ມີສິດຕິດຕັ້ງ, ປຸກສ້າງສິ່ງທີ່ຈຳເປັນໃສ່ທີ່ດິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອແຈກຢາຍ, ເກັບມ້ຽນອຸປະກອນ ແລະ ເຄື່ອງມືຕ່າງໆ, ກວດການ້ຳ ຫຼື ປັບປຸງຄຸນນະພາບຂອງນ້ຳ, ເປັນທີ່ພັກຊົ່ວຄາວ ສຳລັບຜູ້ທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ ລວມທັງສິດເນັ່ງສາຍໄຟຟ້າ, ທໍ່ນ້ຳຜ່ານທີ່ດິນ, ລ່ວງຮ່ອງລະບາຍນ້ຳ ແຕ່ຕ້ອງໄດ້ທົດແທນຄ່າເສຍຫາຍທີ່ເກີດຂຶ້ນນັ້ນຕາມຄວາມເໝາະສົມ.

## ພາກທີ IX
## ກອງທຶນ ນ້ຳ ແລະ ຊັບພະຍາກອນນ້ຳ

**ມາດຕາ 63 (ໃໝ່) ກອງທຶນ ນ້ຳ ແລະ ຊັບພະຍາກອນນ້ຳ**

ກອງທຶນນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນ ກອງທຶນດຽວກັນກັບກອງທຶນປົກປັກຮັກສາສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ.

**ມາດຕາ 64 (ໃໝ່) ແຫຼ່ງກອງທຶນ ນ້ຳ ແລະ ຊັບພະຍາກອນນ້ຳ**

ນອກຈາກແຫຼ່ງທຶນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມແລ້ວກອງທຶນນ້ຳ ແລະ ຊັບພະຍາກອນນ້ຳ ຍັງມີແຫຼ່ງທຶນອື່ນ ດັ່ງນີ້:

1. ຄ່າບູລະນະຟື້ນຟູນ້ຳ ແລະ ຊັບພະຍາກອນນ້ຳ ຈາກໂຄງການລົງທຶນ ແລະ ກິດຈະກຳຕ່າງໆ;
2. ຄ່າບໍລິການ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ແລະ ການປ່ອຍນ້ຳເປື້ອນ;
3. ແຫຼ່ງອື່ນໆ.

**ມາດຕາ 65 (ໃໝ່) ເປົ້າໝາຍການນຳໃຊ້ກອງທຶນ**

ກອງທຶນ ນ້ຳ ແລະ ຊັບພະຍາກອນນ້ຳ ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການສ້າງ ແລະ ປັບປຸງ ນະໂຍບາຍ, ຍຸດທະສາດ, ແຜນການ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ;

2. ການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອປົກປັກຮັກສານ້ຳ ແລະ ຊັບພະຍາກອນນ້ຳ, ສ້າງຕົວແບບໃນການຄຸ້ມຄອງ, ການບໍລິຫານຈັດການ, ການພັດທະນາ ແລະ ການບູລະນະຟື້ນຟູນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ຍືນຍົງ;

3. ການປ້ອງກັນ, ຄວບຄຸມ ຫຼື ກຳຈັດມົນລະພິດທາງນ້ຳ ແລະ ໄພພິບັດຕ່າງໆ ທີ່ກ່ຽວຂ້ອງກັບນ້ຳ ແລະ ຊັບພະຍາກອນນ້ຳ, ສ້າງສູນຝຶກອົບຮົມ, ສູນຂໍ້ມູນ ຂ່າວສານ, ຫ້ອງທົດລອງວິໄຈ ກ່ຽວກັບຄຸນນະພາບນ້ຳ ລວມທັງອຸປະກອນຮັບໃຊ້ວຽກງານດັ່ງກ່າວ;

4. ການຍົກລະດັບຄວາມຮູ້ ແລະ ຄວາມສາມາດທາງດ້ານວິຊາການ ໃຫ້ແກ່ບຸກຄະລາກອນ, ການສຶກສາ, ການສ້າງ ແລະ ປຸກລະດົມຈິດສຳນຶກດ້ານນ້ຳ ແລະ ຊັບພະຍາກອນນ້ຳ ແລະ ຊຸກຍູ້ຂະບວນການເຄື່ອນໄຫວວຽກງານປົກປັກຮັກສານ້ຳ ແລະ ຊັບພະຍາກອນນ້ຳ ເປັນຕົ້ນ ວັນນ້ຳແຫ່ງຊາດ, ວັນນ້ຳໂລກ;

5. ການຄຸ້ມຄອງ ແລະ ການແກ້ໄຂບັນຫານ້ຳ ແລະ ຊັບພະຍາກອນນ້ຳ ທີ່ເປັນບຸລິມະສິດໃນລະດັບຕ່າງໆ;

6. ການຊຸກຍູ້, ສົ່ງເສີມ ແລະ ພັດທະນາພູມປັນຍາທ້ອງຖິ່ນ ເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້, ພັດທະນາ ແລະ ບູລະນະຟື້ນຟູນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ຢູ່ໃນສະພາບທີ່ດີ.

**ມາດຕາ 66 (ໃໝ່) ການຄຸ້ມຄອງ ແລະ ນຳໃຊ້ ກອງທຶນນ້ຳ ແລະ ຊັບພະຍາກອນນ້ຳ**

ການຄຸ້ມຄອງ ແລະ ນຳໃຊ້ ກອງທຶນນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ລວມສູນ ແລະ ເປັນເອກະພາບ ຕາມລະບົບງົບປະມານແຫ່ງລັດ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ;

2. ຖືກຕ້ອງຕາມເປົ້າໝາຍ, ປະຢັດ ແລະ ມີປະສິດທິຜົນ;

3. ທຸກລາຍຮັບ ແລະ ລາຍຈ່າຍ ຕ້ອງກຳນົດເຂົ້າໃນແຜນງົບປະມານແຫ່ງລັດປະຈຳປີ, ຜ່ານລະບົບບັນຊີ ຂອງຄັງເງິນແຫ່ງຊາດ, ລົງບັນຊີຕາມຫຼັກການ ແລະ ຕາມລະບຽບການ ພື້ນຖານການບັນຊີແຫ່ງລັດ;

4. ໃຫ້ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທຳ ແລະ ໂປ່ງໃສ, ຮັບປະກັນລາຍຈ່າຍ ຕາມແຜນການປະຈຳປີ;

5. ມີການກວດກາ ແລະ ກວດສອບ ເປັນປົກກະຕິ ຕາມກົດໝາຍ.

# ພາກທີ X
# ຂໍ້ຫ້າມ

**ມາດຕາ 67 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຄອບຄອງ, ນຳໃຊ້ ທີ່ດິນບໍລິເວນນ້ຳ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

2. ຂຸດຄົ້ນ ຫີນແຮ່, ຊາຍ ແລະ ດິນ ໃນແຫຼ່ງນ້ຳ ໂດຍບໍ່ໄດ້ຮັບອະນຸຍາດ;

3. ອວ່າຍ, ແຍກ ຫຼື ປ່ຽນທາງໄຫຼຂອງນ້ຳ;

4. ຕັດຕົ້ນໄມ້ ທີ່ຢູ່ໃນເຂດປ້ອງກັນຕົ້ນກຳເນີດຂອງນ້ຳ ຫຼື ປຸກສ້າງ ຢູ່ໃນເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;

5. ບໍ່ໃຫ້ມີການປຸກສ້າງ ສິ່ງໃດສິ່ງໜຶ່ງ ຢູ່ຕອນເທິງຂອງແຫຼ່ງນ້ຳ ສຳລັບການອຸປະໂພກ ແລະ ບໍລິໂພກ ທີ່ຈະສົ່ງຜົນກະທົບໃສ່ຄຸນນະພາບນ້ຳ ເປັນຕົ້ນ ໂຮງໝໍ, ຕະຫຼາດ, ໂຮງງານ, ສະໜາມຂີ້ເຫຍື້ອ;

6. ຂຸດ, ເຈາະ, ຖົມ, ກົ່ນ ຫຼື ປັບແປງໜ້າດິນ ທີ່ຈະກໍ່ໃຫ້ເກີດມີການເຊາະເຈື່ອນ ໃນເຂດອ່າງຮັບນ້ຳ, ຖິ້ມ ຫຼື ຖອກເທວັດຖຸສິ່ງຂອງລົງໃນແຫຼ່ງນ້ຳ ຊຶ່ງຈະພາໃຫ້ແຫຼ່ງນ້ຳຕື້ນເຂີນ, ບົກແຫ້ງ, ເນົ່າເໝັນ ຫຼື ເປັນພິດ;

7. ປ່ອຍນ້ຳເປື້ອນ, ສານເຄມີທີ່ເປັນພິດ, ຖິ້ມລະເບີດ, ຖິ້ມສິ່ງເສດເຫຼືອ ແລະ ຖິ້ມຂີ້ເຫຍື້ອໃສ່ແຄມນ້ຳ, ແມ່ນ້ຳ, ລຳເຊ, ຕະຄອງຮ່ອງນ້ຳ, ຫ້ວຍ, ໜອງ, ບຶງ ແລະ ທີ່ດິນບໍລິເວນນ້ຳ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 68 (ໃໝ່) ຂໍ້ຫ້າມສຳລັບພະນັກງານ ຫຼື ເຈົ້າໜ້າທີ່**

ຫ້າມພະນັກງານ ຫຼື ເຈົ້າໜ້າທີ່ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດອຳນາດ, ຕຳແໜ່ງ, ໜ້າທີ່ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອຫາຜົນປະໂຫຍດສ່ວນຕົວ;

2. ທວງເອົາ, ຂໍເອົາ, ຮັບເອົາສິນບົນຈາກຜູ້ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ຫຼື ຜູ້ບໍລິການກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ;

3. ປະຕິບັດໜ້າທີ່ ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເຄື່ອນໄຫວວຽກງານ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ;

4. ເລີນເລີ້ ຫຼື ເມີນເສີຍຕໍ່ການປະຕິບັດໜ້າທີ່, ກົດໜ່ວງ, ຖ່ວງດຶງ ການພິຈາລະນາເອກະສານຕ່າງໆ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ;

5. ປອມແປງເອກະສານ ຫຼື ໃຊ້ເອກະສານປອມ, ເປີດເຜີຍຄວາມລັບຂອງລັດ, ຄວາມລັບທາງລັດຖະການ, ທຳລາຍເອກະສານ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ;

6. ອອກໜັງສືອະນຸຍາດ ສິດນຳໃຊ້ ທີ່ດິນບໍລິເວນນ້ຳ, ທີ່ດິນຍອດນ້ຳ, ປ່າຍອດນ້ຳ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ມາດຕາ 69 (ໃໝ່) ຂໍ້ຫ້າມສຳລັບຜູ້ນຳໃຊ້ນ້ຳ ເພື່ອເປົ້າໝາຍທຸລະກິດ ແລະ ຜູ້ໃຫ້ບໍລິການກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ

ຫ້າມຜູ້ນຳໃຊ້ນ້ຳ ເພື່ອເປົ້າໝາຍທຸລະກິດ ແລະ ຜູ້ໃຫ້ບໍລິການກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອເປົ້າໝາຍທຸລະກິດ ຫຼື ໃຫ້ການບໍລິການກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ ໂດຍບໍ່ໄດ້ຮັບອະນຸຍາດ;

2. ດຳເນີນໂຄງການ, ກິດຈະການ ແລະ ໃຫ້ບໍລິການກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ ໂດຍບໍ່ສອດຄ່ອງກັບການໄດ້ຮັບອະນຸຍາດ;

3. ດຳເນີນທຸລະກິດ ທີ່ສ້າງຜົນກະທົບທາງລົບ ຕໍ່ນ້ຳ ແລະ ຊັບພະຍາກອນນ້ຳ;

4. ນາບຂູ່, ຂັດຂວາງ ຫຼື ບໍ່ໃຫ້ຮ່ວມມື ຕໍ່ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ຮັບຜິດຊອບ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ;

5. ໃຫ້ສິນບົນ ຫຼື ໃຫ້ຄຳໝັ້ນສັນຍາວ່າຈະໃຫ້ສິນບົນແກ່ພະນັກງານ ຫຼື ເຈົ້າໜ້າທີ່, ໃຫ້ຂໍ້ມູນບໍ່ຖືກກັບຄວາມເປັນຈິງ, ປອມແປງເອກະສານ ຫຼື ຕາປະທັບ;

6. ຫຼົບຫຼີກການປະຕິບັດພັນທະ ຕາມກົດໝາຍ ແລະ ລະບຽບການ;

7. ບຸກລຸກ, ທຳລາຍ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;

8. ປ່ອຍນ້ຳເປື້ອນເກີນມາດຕະຖານສິ່ງແວດລ້ອມແຫ່ງຊາດ ຫຼື ນຳໃຊ້ ສານເຄມີທີ່ເປັນພິດທີ່ມີຜົນກະທົບຕໍ່ແຫຼ່ງນ້ຳ;

9. ມອບ, ຢືມ ຫຼື ຂາຍ ໃບອະນຸຍາດການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ແລະ ໃບອະນຸຍາດການປ່ອຍນ້ຳເປື້ອນ ໃຫ້ບຸກຄົນອື່ນໂດຍບໍ່ໄດ້ຮັບການອະນຸຍາດ;

10. ຍ້າຍ, ປ່ຽນແປງ ຫຼື ທຳລາຍເຄື່ອງໝາຍ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;

11. ຂຸດເຈາະນ້ຳສ້າງ, ນ້ຳບາດານ ທີ່ສົ່ງຜົນກະທົບຕໍ່ສິດຂອງບຸກຄົນອື່ນ;

12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ XI
# ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 70 (ໃໝ່) ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງ ອາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການໄກ່ເກ່ຍ ຫຼື ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂ ດ້ວຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານປະຊາຊົນ;
5. ການແກ້ໄຂທີ່ມີລັກສະນະສາກົນ.

**ມາດຕາ 71 (ໃໝ່) ການໄກ່ເກ່ຍ ຫຼື ການປະນີປະນອມ**

ໃນກໍລະນີ ມີຂໍ້ຂັດແຍ່ງທີ່ກໍ່ໃຫ້ເກີດຜົນກະທົບຕໍ່ການນຳໃຊ້, ການຄຸ້ມຄອງ, ການດຳເນີນກິດຈະການ ແລະ ທຸລະກິດ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ ຊຶ່ງບໍ່ຮ້າຍແຮງ ແລະ ມີມູນຄ່າບໍ່ຫຼວງຫຼາຍ ຄູ່ກໍລະນີສາມາດປຶກສາຫາລື, ໄກ່ເກ່ຍ ຫຼື ປະນີປະນອມກັນ.

**ມາດຕາ 72 (ປັບປຸງ) ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີມີຂໍ້ຂັດແຍ່ງທີ່ກໍ່ໃຫ້ເກີດຜົນກະທົບ ຕໍ່ການນຳໃຊ້, ການຄຸ້ມຄອງ, ການດຳເນີນກິດຈະການ ແລະ ທຸລະກິດ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ ຊຶ່ງບໍ່ຮ້າຍແຮງ ແລະ ມີມູນຄ່າບໍ່ຫຼວງຫຼາຍ ຄູ່ກໍລະນີມີສິດສະເໜີໃຫ້ອົງການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ ພິຈາລະນາແກ້ໄຂ. ຖ້າຄູ່ກໍລະນີ ຫາກບໍ່ພໍໃຈໃນການແກ້ໄຂນັ້ນ ກໍມີສິດສະເໜີຕໍ່ອົງການຂັ້ນເທິງຖັດໄປເປັນຜູ້ແກ້ໄຂ.

ຂໍ້ຂັດແຍ່ງທີ່ເນື່ອງຈາກ ທາດສະພາບ ແມ່ນ ອົງການປົກຄອງທ້ອງຖິ່ນ ບ່ອນທີ່ເກີດຂໍ້ຂັດແຍ່ງນັ້ນເປັນຜູ້ແກ້ໄຂ.

**ມາດຕາ 73 (ໃໝ່) ການແກ້ໄຂດ້ວຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີ ທີ່ເກີດຂໍ້ຂັດແຍ່ງທາງດ້ານເສດຖະກິດ ເນື່ອງຈາກການດຳເນີນກິດຈະການນ້ຳ ແລະ ຊັບພະຍາກອນນ້ຳ ຄູ່ກໍລະນີມີສິດຮ້ອງຂໍໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂຕາມກົດໝາຍ.

**ມາດຕາ 74 (ໃໝ່) ການຮ້ອງຟ້ອງ ຕໍ່ ສານປະຊາຊົນ**

ໃນກໍລະນີທີ່ເກີດຂໍ້ຂັດແຍ່ງ ເນື່ອງຈາກການດໍາເນີນກິດຈະການກ່ຽວກັບການນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າ ຄູ່ກໍລະນີມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ.

**ມາດຕາ 75 (ປັບປຸງ) ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ**

ຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງ ສປປ ລາວ ກັບປະເທດອື່ນ ກ່ຽວກັບການຂຸດຄົ້ນ, ນໍາໃຊ້, ຄຸ້ມຄອງ, ປົກປັກຮັກສາ ແລະ ການປ້ອງກັນຜົນເສຍຫາຍຈາກນໍ້າ ແລະ ຊັບພະຍາກອນນໍ້າ ໃຫ້ປະຕິບັດ ຕາມກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

# ພາກທີ XII

# ການຄຸ້ມຄອງ ແລະ ກວດກາ

## ໝວດທີ 1

## ການຄຸ້ມຄອງ ວຽກງານນໍ້າ ແລະ ຊັບພະຍາກອນນໍ້າ

**ມາດຕາ 76 (ໃໝ່) ອົງການຄຸ້ມຄອງວຽກງານນໍ້າ ແລະ ຊັບພະຍາກອນນໍ້າ**

ລັດຖະບານ ຄຸ້ມຄອງວຽກງານນໍ້າ ແລະ ຊັບພະຍາກອນນໍ້າ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງກະສິກໍາ ແລະ ປ່າໄມ້, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງສາທາລະນະສຸກ, ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ກະຊວງສຶກສາທິການ ແລະ ກິລາ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ອົງການຄຸ້ມຄອງວຽກງານນໍ້າ ແລະ ຊັບພະຍາກອນນໍ້າ ປະກອບດ້ວຍ:

1. ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ;
2. ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ;
3. ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ;
4. ໜ່ວຍງານເສດຖະກິດ-ການເງິນບ້ານ.

**ມາດຕາ 77 (ໃໝ່) ສິດ ແລະ ໜ້າທີ່ ຂອງ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ**

ໃນການຄຸ້ມຄອງວຽກງານ ນໍ້າ ແລະ ຊັບພະຍາກອນນໍ້າ, ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບການຄຸ້ມຄອງ, ການບໍລິຫານ ແລະ ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ເປັນແຜນການ, ແຜນງານ ແລະ ໂຄງການລະອຽດແລ້ວ ຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ;

4. ສ້າງແຜນຄຸ້ມຄອງ ນ້ຳ ແລະ ຊັບພະຍາກອນນ້ຳ, ອ່າງຮັບນ້ຳ ໂດຍປະສານສົມທົບກັບກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃຫ້ເປັນລະບົບເອກະພາບໃນຂອບເຂດທົ່ວປະເທດ;

5. ຄົ້ນຄວ້າກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳລະດັບຊາດ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ ແລ້ວນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຮັບຮອງ;

6. ສຳຫຼວດ, ຂຶ້ນທະບຽນ, ຂຶ້ນບັນຊີ, ກຳນົດປະເພດອ່າງຮັບນ້ຳ ແລະ ຈັດສັນອ່າງຮັບນ້ຳ;

7. ສ້າງລະບົບຖານຂໍ້ມູນ ຂ່າວສານ ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ;

8. ກຳນົດປະລິມານນ້ຳໄຫຼຕ່ຳສຸດ ຂອງນ້ຳໜ້າດິນ ແລະ ກຳນົດຂະໜາດການນຳໃຊ້ນ້ຳໃຕ້ດິນ;

9. ປະສານສົມທົບກັບກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກຳນົດມາດຕະຖານຄຸນນະພາບນ້ຳ ແລະ ມາດຕະຖານການປ່ອຍນ້ຳເປື້ອນ ລວມທັງການດຳເນີນການປະເມີນສິ່ງແວດລ້ອມແບບຍຸດທະສາດຂອງຂະແໜງການ ໃຫ້ສອດຄ່ອງກັບສະພາບຕົວຈິງ;

10. ວາງແຜນການ ແລະ ກຳນົດມາດຕະການປ້ອງກັນ ແລະ ຕ້ານຜົນເສຍຫາຍຈາກນ້ຳ, ການບູລະນະຟື້ນຟູນ້ຳ ແລະ ຊັບພະຍາກອນນ້ຳ ໂດຍປະສານສົມທົບກັບກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

11. ຄຸ້ມຄອງ, ຕິດຕາມ ກວດກາ ບັນດາໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ;

12. ອອກ, ໂຈະ, ປ່ຽນແປງ ຫຼື ຖອນ ໃບອະນຸຍາດນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ແລະ ການປ່ອຍນ້ຳເປື້ອນຂະໜາດໃຫຍ່ ໂດຍປະສານສົມທົບກັບກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

13. ອອກໃບອະນຸຍາດການໃຫ້ບໍລິການກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ;

14. ຮັບຄຳສະເໜີ ແລະ ການລາຍງານບັນຫານ້ຳ ແລະ ຊັບພະຍາກອນນ້ຳ ຈາກປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ລວມທັງແກ້ໄຂຂໍ້ຂັດແຍ່ງໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

15. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ແລະ ສາກົນ ກ່ຽວກັບວຽກງານນ້ຳ ແລະ ຊັບພະຍາກອນນ້ຳ;

16. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ລັດຖະບານຢ່າງປົກກະຕິ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ ກຳນົດໄວ້ໃນກົດໝາຍ.

**ມາດຕາ 78 (ໃໝ່) ສິດ ແລະ ໜ້າທີ່ ຂອງ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານນ້ຳ ແລະ ຊັບພະຍາກອນນ້ຳ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ, ໂຄສະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ;

2. ຊີ້ນຳ, ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານຊັບພະຍາກອນນ້ຳຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ;

3. ຄົ້ນຄວ້າ ກຳນົດ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ ແລະ ສະເໜີຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງພິຈາລະນາຮັບຮອງເອົາ;

4. ປະສານສົມທົບກັບພະແນກການ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ ທີ່ກ່ຽວຂ້ອງດຳເນີນການສຳຫຼວດ, ຂຶ້ນທະບຽນ, ຂຶ້ນບັນຊີ ນ້ຳ ແລະ ຊັບພະຍາກອນນ້ຳ;

5. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ ຖານຂໍ້ມູນ ຂ່າວສານ ນ້ຳ ແລະ ຊັບພະຍາກອນນ້ຳ;

6. ສ້າງແຜນຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ ແລະ ແຜນຄຸ້ມຄອງອ່າງຮັບນ້ຳ;

7. ຕິດຕາມ ກວດກາ ແລະ ປະຕິບັດມາດຕະຖານຄຸນນະພາບນ້ຳ ແລະ ມາດຕະຖານການປ່ອຍນ້ຳເປື້ອນ ຕາມທີ່ໄດ້ກຳນົດໄວ້;

8. ຄຸ້ມຄອງ, ຕິດຕາມ ກວດກາ ໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ຕາມການມອບໝາຍຂອງກະຊວງ;

9. ອອກ, ໂຈະ, ປ່ຽນແປງ ຫຼື ຖອນ ໃບອະນຸຍາດນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ແລະ ການປ່ອຍນ້ຳເປື້ອນຂະໜາດກາງ ໂດຍປະສານສົມທົບກັບພະແນກການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

10. ອອກໃບອະນຸຍາດ ນຳໃຊ້ນ້ຳໃຕ້ດິນ ຂະໜາດໃຫຍ່;

11. ອອກໃບອະນຸຍາດການບໍລິການຂຸດເຈາະນ້ຳໃຕ້ດິນ;

12. ຮັບຄຳສະເໜີ ແລະ ການລາຍງານບັນຫານ້ຳ ແລະ ຊັບພະຍາກອນນ້ຳ ຈາກປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ລວມທັງແກ້ໄຂຂໍ້ຂັດແຍ່ງ;

13. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານນ້ຳ ແລະ ຊັບພະຍາກອນນ້ຳ ຕາມການມອບໝາຍ;

14. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານນ້ຳ ແລະ ຊັບພະຍາກອນນ້ຳ ຕໍ່ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 79 (ໃໝ່) ສິດ ແລະ ໜ້າທີ່ຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານນ້ຳ ແລະ ຊັບພະຍາກອນນ້ຳ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໂຄສະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ;

2. ຊີ້ນຳ, ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານນ້ຳ ແລະ ຊັບພະຍາກອນນ້ຳ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ;

3. ຄົ້ນຄວ້າ ກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອສະເໜີ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາຕົກລົງ;

4. ປະສານສົມທົບກັບຫ້ອງການ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ ດຳເນີນການສຳຫຼວດ, ຂຶ້ນທະບຽນ, ຂຶ້ນບັນຊີ ນ້ຳ ແລະ ຊັບພະຍາກອນນ້ຳ;

5. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ຖານຂໍ້ມູນ ຂ່າວສານ ນ້ຳ ແລະ ຊັບພະຍາກອນນ້ຳ;

6. ສ້າງແຜນຄຸ້ມຄອງອ່າງຮັບນ້ຳ;

7. ຕິດຕາມ ກວດກາ ແລະ ປະຕິບັດມາດຕະຖານຄຸນນະພາບນ້ຳ ແລະ ມາດຕະຖານການປ່ອຍນ້ຳເປື້ອນ ຕາມທີ່ໄດ້ກຳນົດໄວ້;

8. ຄຸ້ມຄອງ, ຕິດຕາມກວດກາ ບັນດາໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ຕາມການມອບໝາຍຂອງພະແນກ;

9. ອອກໃບອະນຸຍາດ ນຳໃຊ້ນ້ຳໃຕ້ດິນຂະໜາດກາງ

10. ອອກໃບອະນຸຍາດການໃຫ້ບໍລິການຂຸດເຈາະນ້ຳໃຕ້ດິນ;

11. ຮັບຄຳສະເໜີ ແລະ ການລາຍງານບັນຫານ້ຳ ແລະ ຊັບພະຍາກອນນ້ຳ ຈາກປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ລວມທັງແກ້ໄຂຂໍ້ຂັດແຍ່ງ;

12. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານນໍ້າ ແລະ ຊັບພະຍາກອນນໍ້າຕໍ່ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 80 (ໃໝ່) ສິດ ແລະ ໜ້າທີ່ ຂອງ ໜ່ວຍງານເສດຖະກິດ-ການເງິນບ້ານ

ໃນການຄຸ້ມຄອງວຽກງານນໍ້າ ແລະ ຊັບພະຍາກອນນໍ້າ ໜ່ວຍງານເສດຖະກິດ-ການເງິນບ້ານ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການກ່ຽວກັບວຽກງານນໍ້າ ແລະ ຊັບພະຍາກອນນໍ້າ;

2. ເຜີຍແຜ່, ສຶກສາອົບຮົມ, ສ້າງຈິດສໍານຶກ, ນໍາພາ, ປຸກລະດົມ, ຊຸກຍູ້ ແລະ ສົ່ງເສີມປະຊາຊົນໃຫ້ເປັນເຈົ້າການ ແລະ ເຂົ້າຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ, ແກ້ໄຂບັນຫາ ແລະ ບູລະນະຟື້ນຟູນໍ້າ ແລະ ຊັບພະຍາກອນນໍ້າພາຍໃນບ້ານ;

3. ຄົ້ນຄວ້າ ກໍານົດວັງສະຫງວນນໍ້າ ຂອງບ້ານ ສະເໜີຕໍ່ກອງປະຊຸມບ້ານ ເພື່ອຄວາມເຫັນດີເປັນເອກະພາບ ແລ້ວສະເໜີຕໍ່ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາຕົກລົງ;

4. ຊຸກຍູ້ ປະຊາຊົນ ໃຫ້ເຮັດຮ່ອງລະບາຍນໍ້າ, ຮັກສາຄວາມສະອາດ, ບໍາບັດນໍ້າເປື້ອນໃນຄົວເຮືອນ ເພື່ອຮັບປະກັນຄຸນນະພາບນໍ້າໃນແຫຼ່ງນໍ້າ ແລະ ບໍ່ໃຫ້ນໍ້າຖ້ວມຂັງ;

5. ເຂົ້າຮ່ວມປຶກສາຫາລື ແລະ ແລກປ່ຽນຄໍາເຫັນ ກ່ຽວກັບວຽກງານນໍ້າ ແລະ ຊັບພະຍາກອນນໍ້າ ແລະ ກິດຈະການຕ່າງໆ ເພື່ອແກ້ໄຂບັນຫານໍ້າ ແລະ ຊັບພະຍາກອນນໍ້າ;

6. ເຂົ້າຮ່ວມສໍາຫຼວດ ແລະ ເກັບກໍາຂໍ້ມູນກ່ຽວກັບນໍ້າ ແລະ ຊັບພະຍາກອນນໍ້າ ລວມທັງການເຈາະນໍ້າໃຕ້ດິນ;

7. ຮັບຄໍາສະເໜີ ແລະ ແກ້ໄຂບັນຫາກ່ຽວກັບນໍ້າ ແລະ ຊັບພະຍາກອນນໍ້າ ຈາກປະຊາຊົນ;

8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານນໍ້າ ແລະ ຊັບພະຍາກອນນໍ້າ ຕໍ່ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 81 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງກະສິກໍາ ແລະ ປ່າໄມ້

ກະຊວງກະສິກໍາ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງການນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າ ເພື່ອການຊົນລະປະທານ, ການປະມົງ, ການຜະລິດກະສິກໍາ, ປ່າໄມ້ ແລະ ປ່າຍອດນໍ້າ ໂດຍປະ

ສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ; ເປັນເຈົ້າການຮັບຜິດຊອບໃນການເກັບກຳຂໍ້ມູນ, ວາງແຜນຄຸ້ມຄອງ ແລະ ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ຂອງຂະແໜງການຕົນ ຢ່າງມີປະສິດທິຜົນ ລວມທັງສະໜອງຂໍ້ມູນກ່ຽວກັບການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳໃນຂົງເຂດຕົນຮັບຜິດຊອບໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ມີສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 82 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງພະລັງງານ ແລະ ບໍ່ແຮ່**

ກະຊວງພະລັງງານ ແລະ ບໍ່ແຮ່ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອການຜະລິດພະລັງງານໄຟຟ້ານ້ຳຕົກ ແລະ ໃນຂະບວນການຂຸດຄົ້ນແຮ່ທາດ ໂດຍປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ; ເປັນເຈົ້າການຮັບຜິດຊອບໃນການເກັບກຳຂໍ້ມູນ, ວາງແຜນຄຸ້ມຄອງ ແລະ ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳຂອງຂະແໜງການຕົນ ຢ່າງມີປະສິດທິຜົນ ລວມທັງສະໜອງຂໍ້ມູນກ່ຽວກັບການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ໃນຂົງເຂດຕົນຮັບຜິດຊອບໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ມີສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 83 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ**

ກະຊວງໂຍທາທິການ ແລະ ຂົນສົ່ງ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອການຜະລິດນ້ຳປະປາ, ການເດີນເຮືອ ແລະ ການຂົນສົ່ງທາງນ້ຳ, ການປ້ອງກັນຕາຝັ່ງເຈື່ອນ, ການວາງທໍ່ລະບາຍ ແລະ ລະບົບບຳບັດນ້ຳເປື້ອນໃນຕົວເມືອງ ໂດຍປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ; ເປັນເຈົ້າການຮັບຜິດຊອບໃນການເກັບກຳຂໍ້ມູນ, ວາງແຜນຄຸ້ມຄອງ ແລະ ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳຂອງຂະແໜງການຕົນ ຢ່າງມີປະສິດທິຜົນ ລວມທັງສະໜອງຂໍ້ມູນ ກ່ຽວກັບການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ໃນຂົງເຂດຕົນຮັບຜິດຊອບ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ມີສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 84 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອການຜະລິດອຸດສາຫະກຳປຸງແຕ່ງ ໂດຍປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວ ຂ້ອງ; ເປັນເຈົ້າການຮັບຜິດຊອບໃນການເກັບກຳຂໍ້ມູນ, ວາງແຜນຄຸ້ມຄອງ ແລະ ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ

ຂອງຂະແໜງການຕົນ ຢ່າງມີປະສິດທິຜົນ ລວມທັງສະໜອງຂໍ້ມູນ ກ່ຽວກັບການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ໃນຂົງເຂດຕົນຮັບຜິດຊອບໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ມີສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 85 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ**

ກະຊວງສາທາລະນະສຸກ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອການບຳບັດ-ສຸຂະພາບ, ການປິ່ນປົວ, ກວດກາຄຸນນະພາບຂອງແຫຼ່ງນ້ຳບໍລິໂພກ ແລະ ການສະໜອງນ້ຳສະອາດ ໃຫ້ປະຊາຊົນໃນເຂດຊົນນະບົດ, ເຝົ້າລະວັງຄຸນນະພາບນ້ຳດື່ມ, ນ້ຳໃຊ້ໂດຍປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ; ເປັນເຈົ້າການຮັບຜິດຊອບໃນການ ເກັບກຳຂໍ້ມູນ, ວາງແຜນຄຸ້ມຄອງ ແລະ ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳຂອງຂະແໜງການຕົນ ຢ່າງມີປະສິດທິຜົນ ລວມທັງສະໜອງຂໍ້ມູນກ່ຽວກັບການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ໃນຂົງເຂດຕົນຮັບຜິດຊອບໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ມີສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 86 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອການທ່ອງທ່ຽວທຳມະຊາດ ໂດຍປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ; ເປັນເຈົ້າການຮັບຜິດຊອບໃນການ ເກັບກຳຂໍ້ມູນ, ວາງແຜນຄຸ້ມຄອງ ແລະ ນຳໃຊ້ນ້ຳຂອງຂະແໜງການຕົນ ຢ່າງມີປະສິດທິຜົນ ລວມທັງສະໜອງຂໍ້ມູນ ກ່ຽວກັບການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳໃນຂົງເຂດຕົນຮັບຜິດຊອບ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ມີສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 87 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງສຶກສາທິການ ແລະ ກິລາ**

ກະຊວງສຶກສາທິການ ແລະ ກິລາ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອການກິລາ; ການຮຽນ-ການສອນ, ການພັດທະນາຫຼັກສູດການສຶກສາ, ການຄົ້ນຄວ້າ, ທົດລອງວິທະຍາສາດ ໂດຍປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ; ເປັນເຈົ້າການຮັບຜິດຊອບໃນການເກັບກຳຂໍ້ມູນ, ວາງແຜນຄຸ້ມຄອງ ແລະ ນຳໃຊ້ນ້ຳຂອງຂະແໜງການຕົນ ຢ່າງມີປະສິດທິຜົນ ລວມທັງສະໜອງຂໍ້ມູນ

ກ່ຽວກັບການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ໃນຂົງເຂດຕົນຮັບຜິດຊອບ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ມີສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 88 (ໃໝ່) ສິດ ແລະ ໜ້າທີ່ຂອງອົງການປົກຄອງທ້ອງຖິ່ນ**

ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ຮັບຮອງແຜນຄຸ້ມຄອງອ່າງຮັບນ້ຳ, ກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໃນທ້ອງຖິ່ນຕົນ, ປະກາດເຫດການສຸກເສີນ, ເປັນເຈົ້າການໃນການປ້ອງກັນ, ຕ້ານ ແລະ ແກ້ໄຂຜົນເສຍຫາຍຈາກນ້ຳ ທີ່ເກີດຂຶ້ນໃນທ້ອງຖິ່ນຕົນ ຢ່າງທັນການ ແລະ ມີສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 89 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງການ ແລະ ພາກສ່ວນອື່ນ**

ຂະແໜງການ ແລະ ພາກສ່ວນອື່ນ ມີສິດ ແລະ ໜ້າທີ່ປະສານສົມທົບ, ໃຫ້ການຮ່ວມມືກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການທີ່ໄດ້ກຳນົດໄວ້ໃນມາດຕາ 76 ຂອງກົດໝາຍສະບັບນີ້ ໃນການຄຸ້ມຄອງ, ຕິດຕາມກວດກາ ແລະ ຈັດຕັ້ງປະຕິບັດວຽກງານນ້ຳ ແລະ ຊັບພະຍາກອນນ້ຳ ຕາມພາລະບົດບາດຂອງຕົນ.

## ໝວດທີ 2
## ການກວດກາວຽກງານນ້ຳ ແລະ ຊັບພະຍາກອນນ້ຳ

**ມາດຕາ 90 (ໃໝ່) ອົງການກວດກາວຽກງານນ້ຳ ແລະ ຊັບພະຍາກອນນ້ຳ**

ອົງການກວດກາວຽກງານນ້ຳ ແລະ ຊັບພະຍາກອນນ້ຳ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານນ້ຳ ແລະ ຊັບພະຍາກອນນ້ຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 76 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງມີສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດຖະບານ, ອົງການກວດສອບແຫ່ງລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ສື່ມວນຊົນ.

**ມາດຕາ 91 (ໃໝ່) ສິດ ແລະ ໜ້າທີ່ ຂອງອົງການກວດກາວຽກງານນ້ຳ ແລະ ຊັບພະຍາກອນນ້ຳ**

ອົງການກວດກາວຽກງານນ້ຳ ແລະ ຊັບພະຍາກອນນ້ຳ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງແຜນການ, ແຜນງານກວດກາວຽກງານນ້ຳ ແລະ ຊັບພະຍາກອນນ້ຳ;

2. ກວດກາການຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ;

3. ສະເໜີອົງການທີ່ກ່ຽວຂ້ອງອອກຄຳສັ່ງໂຈະ ຫຼື ຍົກເລີກໂຄງການລົງທຶນ ແລະ ກິດຈະການຕ່າງໆ ເມື່ອພົບເຫັນວ່າມີຜົນກະທົບຕໍ່ນ້ຳ ແລະ ຊັບພະຍາກອນນ້ຳ;

4. ປະສານສົມທົບກັບອົງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານກວດກາຂອງຕົນ.

**ມາດຕາ 92 (ໃໝ່) ເນື້ອໃນການກວດກາ**

ການກວດກາວຽກງານ ນ້ຳ ແລະ ຊັບພະຍາກອນນ້ຳ ມີ ເນື້ອໃນ ດັ່ງນີ້:

1. ການປະຕິບັດ ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານນ້ຳ ແລະ ຊັບພະຍາກອນນ້ຳ;

2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງປະຕິບັດວຽກງານນ້ຳ ແລະ ຊັບພະຍາກອນນ້ຳ;

3. ຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກຂອງພະນັກງານກ່ຽວກັບການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ.

**ມາດຕາ 93 (ໃໝ່) ຮູບການການກວດກາ**

ການກວດກາວຽກງານ ນ້ຳ ແລະ ຊັບພະຍາກອນນ້ຳ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ.

ການກວດກາ ຕາມປົກກະຕິ ແມ່ນ ການກວດກາ ຕາມແຜນການທີ່ມີລັກສະນະກວດກາເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນ ຢ່າງໜ້ອຍ ຊາວສີ່ ຊົ່ວໂມງ.

ການກວດກາ ແບບກະທັນຫັນ ແມ່ນ ການກວດກາ ເມື່ອເຫັນວ່າມີຄວາມຈຳເປັນ, ຮີບດ່ວນ ໂດຍບໍ່ໄດ້ແຈ້ງລ່ວງໜ້າໃຫ້ຜູ້ຖືກກວດກາຮູ້.

ການກວດກາ ໃຫ້ດຳເນີນທັງການກວດກາເອກະສານ ທັງການກວດກາການປະຕິບັດຕົວຈິງ ແລະ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ XIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 94 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້, ພັດທະນາ ແລະ ຂຸດຄົ້ນນ້ຳ ແລະ ຊັບພະຍາກອນນ້ຳ ຢ່າງມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 95 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຫຼື ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

**ມາດຕາ 96 (ໃໝ່) ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຄັ້ງທຳອິດທີ່ບໍ່ເປັນອັນຕະລາຍ ຫຼື ຮ້າຍແຮງ ໂດຍບໍ່ເຈດຕະນາ ແລະ ກໍ່ຄວາມເສຍຫາຍ ທີ່ມີມູນຄ່າບໍ່ຫຼວງຫຼາຍ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

**ມາດຕາ 97 (ໃໝ່) ມາດຕະການທາງວິໄນ**

ພະນັກງານ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ທີ່ເປັນການກະທຳຜິດບໍ່ຮ້າຍແຮງ, ບໍ່ເປັນຄວາມຜິດທາງອາຍາ, ກໍ່ຄວາມເສຍຫາຍທີ່ມີມູນຄ່າບໍ່ຫຼວງຫຼາຍ ແລະ ບໍ່ຈິງໃຈລາຍງານການກະທຳຂອງຕົນ ຈະຖືກລົງວິໄນ ຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

**ມາດຕາ 98 (ໃໝ່) ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ແລະ ເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນໃບອະນຸຍາດນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ, ການປ່ອຍນ້ຳເປື້ອນ ແລະ ອື່ນໆ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ, ຈະຖືກປັບໃໝຕາມລະບຽບການ.

**ມາດຕາ 99 (ໃໝ່) ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຊັບສິນບັດຂອງລັດ ຫຼື ຜູ້ອື່ນ ຕ້ອງຮັບຜິດຊອບໃນການໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 100 (ໃໝ່) ມາດຕະການທາງອາຍາ**

ບຸກຄົນ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຫຼື ກົດໝາຍອື່ນ ທີ່ໄດ້ກຳນົດໂທດທາງອາຍາ ຈະຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

## ພາກທີ XIV
## ບົດບັນຍັດສຸດທ້າຍ

**ມາດຕາ 101 (ໃໝ່) ວັນນ້ຳແຫ່ງຊາດ**

ວັນນ້ຳແຫ່ງຊາດ ແມ່ນ ວັນທີ 11 ຕຸລາ.

ໃນແຕ່ລະປີ ຕ້ອງສ້າງຂະບວນການ ແລະ ຈັດພິທີສະເຫຼີມສະຫຼອງ ດ້ວຍຮູບການທີ່ເໝາະສົມ ເພື່ອສົ່ງເສີມ, ສ້າງຈິດສຳນຶກ ແລະ ຍົກລະດັບຄວາມຕື່ນຕົວ ໃນການຄຸ້ມຄອງ, ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ທົ່ວສັງຄົມ.

**ມາດຕາ 102 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 103 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ສະບັບເລກທີ 02-96/ສພຊ, ວັນທີ 11 ຕຸລາ 1996.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ